ສຽງຂອງສະພາແຫ່ງຊາດ

# ຜູ້ແທນປະຊາຊົນ

PHOUTHEN PASAXON

ສຳນັກງານຕັ້ງຢູ່ອາຄານຄະນະເລຂາທິການສະພາແຫ່ງຊາດ, ໂທ: 021 840 430 email: phouthen.na@gmail.com; www.na.gov.la; app: Lao na

17-24 ກໍລະກົດ 2026
ປີທີ 15
ສະບັບທີ 1074

## ກອງປະຊຸມສະໄໝວິສາມັນເທື່ອທີ 1 ປິດລົງດ້ວຍຜົນສຳເລັດຢ່າງຈົບງາມ



(ສພຊ) - ຕອນບ່າຍວັນທີ 10 ກໍລະກົດນີ້, ກອງປະຊຸມສະໄໝວິສາມັນເທື່ອທີ 1 ຂອງສະພາແຫ່ງຊາດ (ສພຊ) ຊຸດທີ X ໄດ້ປິດລົງດ້ວຍຜົນສຳເລັດຢ່າງຈົບງາມ ໂດຍການເປັນປະທານຂອງທ່ານ ໄຊສົມພອນ ພົມວິຫານ ກຳມະການກົມການເມືອງສູນກາງພັກ, ປະທານສະພາແຫ່ງຊາດ; ເຂົ້າຮ່ວມມີທ່ານ

ອ່ານຕໍ່ໜ້າ 8



ແນວຄິດປະທານ

ໄກສອນ ພົມວິຫານ

ຜູ້ນຳທີ່ປະຊາຊົນເຄົາລົບຮັກ

ພັກຕ້ອງຮັກສາຄວາມເປັນເອກະລາດ ແລະ ເຈົ້າຕົນເອງທາງດ້ານການຈັດຕັ້ງການເມືອງ ແລະ ແນວຄິດ, ຮັກສາບົດບາດການນຳຂອງຕົນໃຫ້ໝັ້ນຄົງ; ພ້ອມກັນນັ້ນ, ກໍນັບຖືລັກສະນະເປັນເອກະລາດຂອງບັນດາອົງການຈັດຕັ້ງອື່ນໆ ແລະ ຮູ້ໝູນໃຊ້ຍຸດໂທບາຍຢ່າງຄ່ອງແຄ່ວ, ອ່ອນໂຍນ, ຮັບປະກັນຄວາມສາມັກຄີອັນກວ້າງຂວາງ ແລະ ແໜ້ນແຟ້ນ.

(ນິພົນເລືອກເຟັ້ນ ເຫຼັ້ມ 1, ໜ້າ 136)

ອ່ານຕໍ່ສະບັບໜ້າ

## ປະທານປະເທດ ເນັ້ນໃຫ້ສື່ມວນຊົນເປັນກະບອກສຽງອັນແຫຼມຄົມ ໃນຍຸກແຫ່ງການປ່ຽນແປງໃໝ່



(ສພຊ) - ວັນທີ 15 ກໍລະກົດນີ້, ທ່ານ ທອງລຸນ ສີສຸລິດ ເລຂາທິການໃຫຍ່ຄະນະບໍລິຫານງານສູນກາງພັກ, ປະທານປະເທດ ໄດ້ມີຄຳເຫັນໂອ້ລົມຕໍ່ກອງປະຊຸມວຽກງານສື່ມວນຊົນທົ່ວປະເທດ ຄັ້ງທີ I ໂດຍເນັ້ນໃຫ້ສື່ມວນຊົນທຸກຂະແໜງການທັງສູນກາງ ແລະ ທ້ອງຖິ່ນ ສືບຕໍ່ປັບປຸງ, ຍົກລະດັບວຽກງານວິຊາສະເພາະຂອງຕົນ ໃຫ້ກ້າວສູ່ຄຸນນະພາບໃໝ່,ເປັນກະບອກສຽງທີ່ແຫຼມຄົມໃນການປຸກລະດົມ, ໂຄສະນາ, ປະຊາສຳພັນແນວທາງ, ນະໂຍບາຍຂອງພັກ-ລັດ ແລະ ເຫດການສຳຄັນຕ່າງໆ ໃຫ້ສັງຄົມໄດ້ຮັບຮູ້ຢ່າງທົ່ວເຖິງ, ຖືກຕ້ອງ, ຊັດເຈນ ແລະ ວ່ອງໄວ, ທັນເຫດການ.

ທ່ານ ທອງລຸນ ສີສຸລິດ ໃຫ້ທິດຊີ້ນຳວ່າ: ສື່ມວນຊົນທຸກພາກສ່ວນໃນ ສປປລາວ ຕ້ອງມີຄວາມສາມັກຄີກົມກ່ຽວກັນ, ຮຽນຮູ້ເຊິ່ງກັນແລະກັນເປັນປະຈຳ,ຕ້ອງກຳແໜ້ນສະພາບການທີ່ຜັນແປຢ່າງທັນການ, ກຳໃຫ້ໄດ້ໃຫ້ຖືກ, ອັນໃດຜິດອັນໃດຖືກ, ອັນໃດແມ່ນການສະເໜີ ແລະ ການຕຳນິຕິຕຽນຢ່າງສ້າງສັນ, ອັນໃດແມ່ນການໃສ່ຮ້າຍ

ອ່ານຕໍ່ໜ້າ 3




## ຄຳເຫັນ ສສຊ ຕໍ່ວາລະແຫ່ງຊາດ ວ່າດ້ວຍການພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກ



(ສພຊ) - ວັນທີ 8 ກໍລະກົດ 2026 ທ່ານ ໄຊສົມພອນ ພົມວິຫານ ປະທານສະພາແຫ່ງຊາດ ໄດ້ສັງລວມການປະກອບຄຳເຫັນຂອງບັນດາທ່ານສະມາຊິກສະພາແຫ່ງຊາດ (ສສຊ) 40 ທ່ານ ເປັນຍິງ 08 ທ່ານ; ນອກນັ້ນ, ຍັງໄດ້ມີການ

ອ່ານຕໍ່ໜ້າ 8

## ພັດທະນາວຽກງານສື່ມວນຊົນສູ່ຄຸນນະພາບໃໝ່ຢ່າງແຂງແຮງ



ອ່ານຕໍ່ໜ້າ 3

## ສູນທອນພິດປິດກອງປະຊຸມສະໄໝວິສາມັນເທື່ອທີ 1 ຂອງສະພາແຫ່ງຊາດ ຊຸດທີ X



(ສພຊ) - ໃນພິທີປິດກອງປະຊຸມສະໄໝວິສາມັນເທື່ອທີ 1 ຂອງສະພາແຫ່ງຊາດ ຊຸດທີ X, ທ່ານ ໄຊສົມພອນ ພົມວິຫານ ປະທານສະພາແຫ່ງຊາດ ໄດ້ກ່າວສູນທອນພິດປິດກອງປະຊຸມວ່າ: ກອງປະຊຸມສະໄໝວິສາມັນເທື່ອທີ 1 ຂອງສະພາແຫ່ງຊາດ ຊຸດທີ X ໄດ້ດຳເນີນ

ອ່ານຕໍ່ໜ້າ 4

## ພິທີມອບ-ຮັບເງິນສະໜັບສະໜູນກອງປະຊຸມສະໄໝວິສາມັນເທື່ອທີ 1




ອ່ານຕໍ່ໜ້າ 3

**ຊົມເຊີຍວັນສ້າງຕັ້ງສະຫະພັນແມ່ຍິງລາວ ຄົບຮອບ 71 ປີ (20 ກໍລະກົດ 1955 - 20 ກໍລະກົດ 2026) ຢ່າງສຸດໃຈ!**

# ມີຄຳຄິດຄຳເຫັນຜ່ານໂທລະສັບສາຍດ່ວນ ມາຍັງກອງປະຊຸມສະໄໝວິສາມັນ 153 ສາຍ, 208 ເລື່ອງ



(ສພຊ) - ຕອນແລງວັນສຸກທີ 10 ກໍລະກົດນີ້, ທ່ານ ບຸນຈັນ ສີວົງພັນ ກຳມະການສູນກາງພັກ, ຫົວໜ້າຫ້ອງວ່າການສະພາແຫ່ງຊາດ ໄດ້ຖະແຫຼງຂ່າວຕໍ່ສື່ມວນຊົນກ່ຽວກັບຜົນສຳເລັດກອງປະຊຸມສະໄໝວິສາມັນເທື່ອທີ 1 ຂອງສະພາແຫ່ງຊາດ (ສພຊ) ຊຸດທີ X ເຊິ່ງທ່ານໃຫ້ຮູ້ວ່າ: ກອງປະຊຸມສະໄໝວິສາມັນເທື່ອທີ 1 ໄດ້ດຳເນີນຂຶ້ນນັບແຕ່ວັນທີ 6 ຫາ ວັນທີ 10 ກໍລະກົດ 2026 ພາຍໃຕ້ການເປັນປະທານຂອງທ່ານ ໄຊສົມພອນ ພົມວິຫານ ກຳມະການກົມການເມືອງສູນກາງພັກ, ປະທານສະພາແຫ່ງຊາດ ພ້ອມດ້ວຍບັນດາທ່ານຮອງປະທານສະພາແຫ່ງຊາດ ໂດຍມີການນຳຂັ້ນສູງພັກ-ລັດ, ອະດີດການນຳພັກ-ລັດ, ສະມາຊິກລັດຖະບານ, ບັນດາທູຕານຸທູດ ແລະ ອົງການຈັດຕັ້ງສາກົນ ເຂົ້າຮ່ວມຢ່າງພ້ອມພຽງ; ມາຮອດຕອນບ່າຍຂອງມື້ນີ້, ກອງປະຊຸມໄດ້ສຳເລັດຜົນຢ່າງຈົບງາມ. ກອງປະຊຸມສະໄໝວິສາມັນຄັ້ງນີ້ ໄດ້ພິຈາລະນາບັນຫາສຳຄັນພື້ນຖານຂອງປະເທດຊາດ ຄື:

1. ຮັບຟັງບົດລາຍງານຂອງລັດຖະບານ ກ່ຽວກັບຜົນການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ແຜນງົບປະມານແຫ່ງລັດ ແລະ ແຜນເງິນຕາ 6 ເດືອນຕົ້ນປີ ແລະ ທິດທາງແຜນການ 6 ເດືອນທ້າຍປີ 2026;

2. ການພິຈາລະນາຂໍ້ສະເໜີຂອງລັດຖະບານ ກ່ຽວກັບການຍົກລະດັບບັນຫາການພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກ ຂຶ້ນເປັນວາລະແຫ່ງຊາດ;

3. ການພິຈາລະນາຮັບຮອງເອົາການສ້າງ ແລະ ປັບປຸງກົດໝາຍ 2 ສະບັບ ຄື: ກົດໝາຍວ່າດ້ວຍຄັງເງິນແຫ່ງລັດ (ສະບັບສ້າງໃໝ່)ແລະກົດໝາຍວ່າດ້ວຍງົບປະມານແຫ່ງລັດ (ສະບັບປັບປຸງ).

ກອງປະຊຸມໄດ້ຮັບຟັງການຊີ້ແຈງຂອງທ່ານນາຍົກລັດຖະມົນຕີ ແລະ ສະມາຊິກລັດຖະບານ ຈຳນວນ 9 ທ່ານ, ເຊິ່ງສ່ວນໃຫຍ່ໄດ້ຂຶ້ນຊີ້ແຈງຕໍ່ຄຳຊັກຖາມຂອງສະມາຊິກສະພາແຫ່ງຊາດ (ສສຊ) ເຊິ່ງຕິດພັນກັບຂົງເຂດຄວາມຮັບຜິດຊອບຂອງລັດຖະບານ ແລະ ບັນດາບັນຫາທີ່ສັງຄົມພວມໃຫ້ຄວາມສົນໃຈ; ສສຊ ໄດ້ຍົກສູງຄວາມຮັບຜິດຊອບການເມືອງຂອງຕົນໃນການປະກອບຄຳຄິດຄຳເຫັນ ແລະ ລົງຄະແນນສຽງຕໍ່ 4 ມະຕິ ດ້ວຍຄະແນນສູງສຸດ ແຕ່ 99% ຂຶ້ນໄປ ຄືດັ່ງນີ້:

1. ມະຕິຮັບຮອງເອົາບົດລາຍງານຂອງລັດຖະບານ ວ່າດ້ວຍການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ແຜນງົບປະມານແຫ່ງລັດ, ແຜນເງິນຕາ 6 ເດືອນຕົ້ນປີ ແລະ ທິດທາງແຜນການ 6 ເດືອນທ້າຍປີ 2026 ດ້ວຍຄະແນນສຽງ 99.39%;

2. ມະຕິຮັບຮອງເອົາວາລະແຫ່ງຊາດ ວ່າດ້ວຍການພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກ ດ້ວຍຄະແນນສຽງ 99.39%;

3. ມະຕິຮັບຮອງເອົາກົດໝາຍວ່າດ້ວຍຄັງເງິນແຫ່ງລັດ (ສ້າງໃໝ່) ດ້ວຍຄະແນນສຽງ 99.38%;

4. ມະຕິຮັບຮອງເອົາກົດໝາຍວ່າດ້ວຍງົບປະມານແຫ່ງລັດ(ປັບປຸງ)ດ້ວຍຄະແນນສຽງ 100%.

ທ່ານ ບຸນຈັນ ສີວົງພັນ ຍັງໃຫ້ຮູ້ອີກວ່າ: ໃນໄລຍະດຳເນີນກອງປະຊຸມ ມີປະຊາຊົນບັນດາເຜົ່າ ໄດ້ສົ່ງຄຳຄິດຄຳເຫັນຜ່ານໂທລະສັບສາຍດ່ວນ(156) ມາຍັງກອງປະຊຸມ ສພຊ ມີທັງໝົດ 153 ສາຍ, ລວມທັງໝົດ 208 ເລື່ອງ ເຊິ່ງພົວພັນເຖິງການພັດທະນາເສດຖະກິດ-ສັງຄົມ, ການຄຸ້ມຄອງບໍລິຫານລັດ ເປັນຕົ້ນ ບັນຫາລາຄາໄຟຟ້າແພງ, ເສັ້ນທາງເປ່ເພ, ການຂຸດຄົ້ນບໍ່ແຮ່ຊະຊາຍ, ລາຄາສິນຄ້າອຸປະໂພກ-ບໍລິໂພກແພງ, ບັນຫາຢາເສບຕິດ ແລະ ອື່ນໆ.

# ຄະນະຜູ້ແທນສະພາແຫ່ງຊາດ ສຳເລັດການເຂົ້າຮ່ວມກອງປະຊຸມສະມັດຊາໃຫຍ່ APF ຄັ້ງທີ 51




(ສພຊ) - ລະຫວ່າງວັນທີ 6-12 ກໍລະກົດ 2026, ທ່ານ ມີໄຊ ພົມເຂ ຮອງຫົວໜ້າຫ້ອງວ່າການສູນກາງພັກ, ສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງທີ 7 ແຂວງໄຊຍະບູລີ, ປະທານຄະນະສະມັດຊາລັດຖະສະພາປະເທດທີ່ໃຊ້ພາສາຝຣັ່ງ (APF) ຂອງສະພາແຫ່ງຊາດລາວ ແລະ ທ່ານ ຄຳແສນ ສີສະວົງ ສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງທີ 7 ແຂວງໄຊຍະບູລີ, ຮອງປະທານຄະນະສະມັດຊາລັດຖະສະພາປະເທດທີ່ໃຊ້ພາສາຝຣັ່ງ ພ້ອມດ້ວຍວິຊາການ ແລະ ຄະນະຊາວໜຸ່ມ ໄດ້ເຂົ້າຮ່ວມກອງປະຊຸມສະມັດຊາໃຫຍ່ລັດຖະສະພາປະເທດທີ່ໃຊ້ພາສາຝຣັ່ງ ຄັ້ງທີ 51 (La 51ème Session de l' Assemblée Parlementaire de la Francophonie) ແລະ ກອງປະຊຸມສະມັດຊາໃຫຍ່ລັດຖະສະພາຊາວໜຸ່ມທີ່ໃຊ້ພາສາຝຣັ່ງ ຄັ້ງທີ 11 (la 11è Parlement francophone des jeunes de l'APF (PFJ)) ທີ່ນະຄອນຫຼວງຢາອຸນເດ (Yaounde), ປະເທດກາເມີຣູນ.

ກອງປະຊຸມສະມັດຊາໃຫຍ່ APF ໄດ້ມີຄະນະຜູ້ແທນຈາກ 39 ປະເທດສະມາຊິກ APF ພ້ອມດ້ວຍຜູ້ຕາງໜ້າອົງການຝຣັ່ງໂກໂຟນີສາກົນ (OIF), ຄະນະເລຂາທິການໃຫຍ່ຂອງສະມັດຊາ APF, ຄະນະນຳຈາກປະເທດກາເມີຣູນ, ບັນດາສະມາຊິກລັດຖະສະພາ ແລະ ເຈົ້າໜ້າທີ່ກ່ຽວຂ້ອງຂອງປະເທດເຈົ້າພາບ ລວມ 400 ກວ່າທ່ານເຂົ້າຮ່ວມ; ພ້ອມດຽວກັນນີ້, ໃນກອງປະຊຸມສະມັດຊາໃຫຍ່ລັດຖະສະພາຊາວໜຸ່ມ APF ໄດ້ມີຕົວແທນຊາວໜຸ່ມຈາກ 61 ປະເທດສະມາຊິກ APF ຈຳນວນ 180 ກວ່າທ່ານເຂົ້າຮ່ວມ. ກອງປະຊຸມສະມັດຊາໃຫຍ່ APF ໄດ້ດຳເນີນໄປພາຍໃຕ້ຫົວຂໍ້ຕົ້ນຕໍ "ການພົວພັນພະຫຸພາຄີ (ຫຼາຍຝ່າຍ) ແລະ ອະທິປະໄຕຂອງລັດ (Multilatéralisme et souveraineté des Etats)" ແລະ ດຳເນີນໄປຄວບຄູ່ກັບບັນດາກອງປະຊຸມຍ່ອຍທີ່ສຳຄັນ ເຊັ່ນ: ກອງປະຊຸມຄະນະບໍລິຫານງານ APF, ກອງປະຊຸມຂອງ 4 ກຳມາທິການປະຈຳ APF (ກຳມາທິການການເມືອງ; ກຳມາທິການວຽກງານລັດຖະສະພາ; ກຳມາທິການເສດຖະກິດ, ສັງຄົມ ແລະ ສິ່ງ ແວດລ້ອມ; ກຳມາທິການສຶກສາ, ວັດທະນະທຳ ແລະ ການສື່ສານ) ແລະ ກອງປະຊຸມ 2 ເຄືອຂ່າຍປະຈຳຂອງ APF (ເຄືອຂ່າຍສະມາຊິກລັດຖະພາເພດຍິງ ແລະ ເຄືອຂ່າຍສະມາຊິກລັດຖະສະພາໜຸ່ມ).

ຄະນະຜູ້ແທນໄດ້ຮ່ວມກັນປຶກສາຫາລືແລະແລກປ່ຽນຄຳຄິດຄຳເຫັນທີ່ກ່ຽວຂ້ອງກັບການປັບປຸງດ້ານງົບປະມານພາຍໃນອົງການ, ຮັບຮອງບົດລາຍງານການເງິນປະຈຳປີ 2025, ປັບປຸງແຜນງົບປະມານປີ 2026 ແລະ ຕັດສິນໃຈຈັດຕັ້ງຄະນະເຮັດວຽກເພື່ອທົບທວນຫຼັກເກນການຄິດໄລ່ຄ່າບຳລຸງຂອງສະມາຊິກ ພ້ອມທັງອະນຸຍາດໃຫ້ນຳໃຊ້ກອງທຶນສະໜັບສະໜູນ ເພື່ອສົ່ງເສີມກິດຈະກຳການທູດລັດຖະສະພາ ແລະ ການຈັດກອງປະຊຸມສາກົນ; ນອກຈາກນີ້, ຍັງໄດ້ຮັບຟັງການລາຍງານກ່ຽວກັບສະຖານະການທາງການເມືອງໃນບັນດາປະເທດຝຣັ່ງໂກໂຟນີ, ຮັບຮອງມະຕິຮັບປະເທດກາບົງ ແລະ ປະເທດຊາດ (Chad) ກັບຄືນເປັນສະມາຊິກສົມບູນ, ສືບຕໍ່ຕິດຕາມສະຖານະການທີ່ພົ້ນເດັ່ນໃນສາກົນ ໂດຍສະເພາະປະເທດທີ່ໃຊ້ພາສາຝຣັ່ງ. ພ້ອມດຽວກັນນັ້ນ, ກໍໄດ້ຮັບຟັງບົດລາຍງານຜົນສຳເລັດກອງປະຊຸມຂອງຄະນະກຳມາທິການ, ຄະນະພາກພື້ນ, ຄະນະເຄືອຂ່າຍປະຈຳ APF ຄັ້ງທີ່ຜ່ານມາ ພ້ອມທັງຮັບຮອງການປ່ຽນແປງອົງປະກອບຂອງຄະນະບໍລິຫານ APF ຊຸດໃໝ່ ໂດຍໃນນັ້ນໄດ້ມີການຮັບຮອງການແຕ່ງຕັ້ງທ່ານ ມີໄຊ ພົມເຂເຂົ້າເປັນສະມາຊິກຄະນະບໍລິຫານ APF ຢ່າງເປັນທາງການ; ນອກນັ້ນ, ຍັງໄດ້ຮັບຮອງຮ່າງບົດບັນຍັດວ່າດ້ວຍການກຳຈັດຂໍ້ເຫຍື້ອພາດສະຕິກ, ສະເໜີການປັບປຸງຂໍ້ບັງຄັບ ແລະ ກົດລະບຽບພາຍໃນຂອງ APF, ສ້າງຕັ້ງຄະນະອະນຸກຳມະການດ້ານປ້ອງກັນຊາດ ແລະ ຄວາມ

ອ່ານຕໍ່ໜ້າ 5

# ກິດຈະກຳບານເຕະ ຫສຊ-JDB




(ສພຊ) - ຕອນແລງວັນສຸກທີ 10 ກໍລະກົດ 2026, ຫ້ອງວ່າການສະພາແຫ່ງຊາດ (ຫສຊ) ໄດ້ສ້າງກິດຈະກຳກິລາບານເຕະມິດຕະພາບ ຊາຍ-ຍິງ ຮ່ວມກັບ ທະນາຄານ ຮ່ວມພັດທະນາ ມະຫາຊົນ (JDB) ທີ່ເດີ່ນກິລາເຟີຣາຣີ, ບ້ານຮ່ອງແກ ເມືອງໄຊເສດຖາ ນະຄອນຫຼວງວຽງຈັນ; ມີຜູ້ເຂົ້າຮ່ວມເບື້ອງ ຫສຊ ນຳໂດຍທ່ານ ເຂັມພອນ ອາໂນໄທ ຮອງຫົວໜ້າຫ້ອງວ່າການສະພາແຫ່ງຊາດ ທັງເປັນຫົວໜ້າອະນຸກຳມະການຂະບວນການ, ທ່ານ ວຽງແກ້ວ ວັນນະຈັກ ແລະ ທ່ານ ຄຳສະໄໝ ສຳມາວົງ ຮອງຫົວໜ້າຫ້ອງວ່າການສະພາແຫ່ງຊາດ ພ້ອມດ້ວຍບັນດາຄະນະກົມ, ຄະນະພະແນກ ແລະ ເບື້ອງ JDB ມີທ່ານ ສາຄອນ ຍໍພັນໄຊ ຜູ້ອຳນວຍການ ພ້ອມດ້ວຍຮອງຜູ້ອຳນວຍການ, ພະແນກ ແລະ ໜ່ວຍງານບໍລິຫານຕ່າງໆ ຕະຫຼອດຮອດນັກກິລາຂອງທັງສອງຝ່າຍ ເຂົ້າຮ່ວມຢ່າງພ້ອມພຽງ ແລະ ຟົດຟື້ນ.

ການຈັດກິດຈະກຳໃນຄັ້ງນີ້ ມີຈຸດປະສົງເພື່ອສ້າງຂະບວນການຂໍ່ານັບຮັບຕ້ອນກອງປະຊຸມໃຫຍ່ສະມາຊິກພັກຄັ້ງທີ III ຂອງຄະນະພັກຮາກຖານຫ້ອງວ່າການສະພາແຫ່ງຊາດ ແລະ ກອງປະຊຸມໃຫຍ່ຜູ້ແທນຄັ້ງທີ V ຂອງອົງຄະນະພັກສະພາແຫ່ງຊາດ ທີ່ຈະໄດ້ດຳເນີນຂຶ້ນ, ທັງເປັນການຮັດແໜ້ນຄວາມສາມັກຄີ ແລະ ສ້າງສິ່ງອຳນວຍຄວາມສະດວກໃນການປະສານສົມທົບດ້ານວຽກງານວິຊາສະເພາະ ລະຫວ່າງຫ້ອງວ່າການສະພາແຫ່ງຊາດກັບທະນາຄານຮ່ວມພັດທະນາ ມະຫາຊົນ ໃຫ້ນັບມື້ມີຄວາມແໜ້ນແຟ້ນຍິ່ງໆຂຶ້ນ; ນອກຈາກນີ້, ຍັງເປັນການສົ່ງເສີມໃຫ້ພະນັກງານ-ລັດຖະກອນ ໄດ້ອອກກຳລັງກາຍເພື່ອສຸຂະພາບທີ່ແຂງແຮງ.

ພາຍຫຼັງສິ້ນສຸດການແຂ່ງຂັນກິລາ, ທັງສອງພາກສ່ວນ ກໍໄດ້ຮ່ວມພາເຂົ້າສາມັກຄີຢ່າງເປັນກັນເອງ ແລະ ອົບອຸ່ນ ເພື່ອເພີ່ມທະວີຄວາມສະໜິດສະໜົມຮັກແພງເຊິ່ງກັນແລະກັນຕື່ມອີກ.

ຜູ້ແທນປະຊາຊົນ
ສຽງຂອງສະພາແຫ່ງຊາດ PHOUTHEN PASAXON




## ພັດທະນາ...

(ຕໍ່ຈາກໜ້າ 1)

(ສພຊ) - ກອງປະຊຸມວຽກງານສື່ມວນຊົນທົ່ວປະເທດ ຄັ້ງທີ I ພາຍໃຕ້ຫົວຂໍ້: "ເພີ່ມທະວີບົດບາດການນຳພາຂອງພັກ, ພັດທະນາວຽກງານສື່ມວນຊົນ ໃຫ້ຫັນປ່ຽນສູ່ຄຸນນະພາບໃໝ່ຢ່າງແຂງແຮງ" ໄດ້ປິດລົງດ້ວຍຜົນສຳເລັດຢ່າງຈົບງາມ ໃນວັນທີ 15 ກໍລະກົດນີ້ ທີ່ຫໍປະຊຸມແຫ່ງຊາດ ໂດຍການເຂົ້າຮ່ວມໂອ້ລົມຂອງທ່ານ ທອງລຸນ ສີສຸລິດ ເລຂາທິການໃຫຍ່ຄະນະບໍລິຫານງານສູນກາງພັກ, ປະທານປະເທດ, ມີທ່ານ ສອນໄຊ ສີພັນດອນ ກຳມະການກົມການເມືອງສູນກາງພັກ, ນາຍົກລັດຖະມົນຕີ, ທ່ານ ຄຳພັນ ເຜີຍຍະວົງ ກຳມະການກົມການເມືອງສູນກາງພັກ, ຫົວໜ້າຄະນະໂຄສະນາອົບຮົມສູນກາງພັກ ທັງເປັນຮອງປະທານສະພາທິດສະດີສູນກາງພັກ, ບັນດາການນຳ ແລະ ອະດີດການນຳຂັ້ນສູງ, ຜູ້ແທນສື່ມວນຊົນຈາກສູນກາງ ແລະ ທ້ອງຖິ່ນ ເຂົ້າຮ່ວມຢ່າງພ້ອມພຽງ.

ທ່ານ ວິໄລ ຫຼ້າຄຳຟອງ ກຳມະການກົມການເມືອງສູນກາງພັກ, ຜູ້ປະຈຳການຄະນະເລຂາທິການສູນກາງພັກ ທັງເປັນຫົວໜ້າຄະນະຊີ້ນຳກອງປະຊຸມ ໄດ້ກ່າວປິດກອງປະຊຸມວ່າ: ກອງປະຊຸມຄັ້ງນີ້, ໄດ້ຮັບຟັງການສະຫຼຸບຕີລາຄາການຈັດຕັ້ງເຄື່ອນໄຫວວຽກງານສື່ມວນຊົນໃນໄລຍະຜ່ານມາ ເປັນການສ່ອງແສງໃຫ້ເຫັນເຖິງຜົນງານວຽກງານສື່ມວນຊົນທົ່ວປະເທດ ແລະ ວາງທິດທາງແຜນພັດທະນາວຽກງານສື່ມວນຊົນ ແຕ່ນີ້ເຖິງປີ 2030, ບົດປະກອບຄຳເຫັນຈາກພາກສ່ວນຕ່າງໆຂອງສື່ມວນຊົນທີ່ກ່ຽວຂ້ອງ ຈຳນວນ 12 ບົດ ທີ່ມີເນື້ອໃນສ່ອງແສງໃຫ້ເຫັນເຖິງການຈັດຕັ້ງປະຕິບັດໜ້າທີ່ການເມືອງຂອງສື່ມວນຊົນຢ່າງມີຜົນສຳເລັດ; ພ້ອມນັ້ນ, ກໍໄດ້ແລກປ່ຽນຄຳຄິດຄຳເຫັນກ່ຽວກັບບັນຫາຕ່າງໆຢ່າງກົງໄປກົງມາ ເຊິ່ງເປັນພື້ນຖານໃຫ້ການຍົກສູງພາລະບົດບາດແລະຢັ້ງຢືນເຖິງຜົນງານຫຼາຍດ້ານ ທີ່ຂົງເຂດວຽກງານສື່ມວນຊົນຍາດມາໄດ້ ກໍຄືການຈັດຕັ້ງປະຕິບັດໜ້າທີ່ການເມືອງທີ່ໄດ້ຮັບມອບໝາຍ.

ກອງປະຊຸມຄັ້ງນີ້ ດຳເນີນໄປທ່າມກາງບັນຍາກາດທີ່ທົ່ວພັກ, ທົ່ວລັດ ແລະ ປະຊາຊົນລາວບັນດາເຜົ່າ ໄດ້ພ້ອມກັນສຸມເຫື່ອແຮງສະຕິປັນຍາ, ຄວາມຮູ້-ຄວາມສາມາດ ເຂົ້າໃນການຈັດຕັ້ງຜັນຂະຫຍາຍມະຕິກອງປະຊຸມໃຫຍ່ຜູ້ແທນທົ່ວປະເທດ ຄັ້ງທີ XII ຂອງພັກ ເຊິ່ງເປັນພື້ນຖານສຳຄັນໃນການສືບຕໍ່ຈັດຕັ້ງຜັນຂະຫຍາຍກອງປະຊຸມສື່ມວນຊົນໃຫ້ປາກົດຜົນເປັນຈິງ, ແນໃສ່ຍົກສູງບົດບາດວຽກງານສື່ມວນຊົນທົ່ວປະເທດ ໃຫ້ມີການຫັນປ່ຽນໄປສູ່ຄຸນນະພາບໃໝ່ບົນພື້ນຖານການຈັດຕັ້ງປະຕິບັດຄຳຂວັນ: "ຍົກສູງບົດບາດການນຳພາຂອງພັກ, ພັດທະນາວຽກງານສື່ມວນຊົນ ໄປສູ່ຄຸນນະພາບໃໝ່ຢ່າງແຂງແຮງ"; ກອງປະຊຸມຄັ້ງນີ້, ເປັນຄັ້ງທຳອິດ ພາຍຫຼັງມີມະຕິຂອງກົມການເມືອງສູນກາງພັກວ່າດ້ວຍການເພີ່ມທະວີການນຳພາຂອງພັກ ແລະ ການຄຸ້ມຄອງລັດ ຕໍ່ສື່ມວນຊົນໃນໄລຍະໃໝ່ສະບັບເລກທີ 36 (ປີ 1993) ເປັນຕົ້ນມາ, ພັກເຮົາສາມາດຢັ້ງຢືນໄດ້ວ່າ ໝາກຜົນອັນສຳຄັນທີ່ເປັນຮູບປະທຳໃນການນຳພາຂອງພັກຕໍ່ວຽກງານສື່ມວນຊົນ. ຕະຫຼອດໄລຍະ 30 ກວ່າປີຜ່ານມາ, ພວກເຮົາມີຄວາມພາກພູມໃຈທີ່ໄດ້ເຫັນການມີສ່ວນຮ່ວມຢ່າງຕັ້ງໜ້າຈາກບັນດາພະນັກງານສື່ມວນຊົນໃນອະດີດ ກໍຄືປັດຈຸບັນ ໄດ້ຮ່ວມກັນຕີລາຄາສູງ, ທົບທວນຄືນບັນດາຜົນງານຢ່າງພາວະວິໄສ ຜ່ານພຶດຕິກຳຕົວຈິງ ແລະ ໄດ້ຍົກໃຫ້ເຫັນດ້ານດີທີ່ພົ້ນເດັ່ນ, ດ້ານອ່ອນ, ຂໍ້ຄົງຄ້າງ, ສິ່ງທ້າທາຍໃນຍຸກສະໄໝ ແລະ ຖອດໄດ້ບົດຮຽນທີ່ມີຄຸນຄ່າຕໍ່ການພັດທະນາວຽກງານສື່ມວນຊົນ; ພ້ອມດຽວກັນນັ້ນ, ກໍໄດ້ຮ່ວມກັນກຳນົດທິດທາງແຜນການ, ມາດຕະການ ແລະ ວິທີການຈັດຕັ້ງປະຕິບັດໃນຕໍ່ໜ້າ ເພື່ອຍົກສູງຄຸນນະພາບຂອງສື່ມວນຊົນລາວໃຫ້ມີປະສິດທິຜົນກ້າວຂຶ້ນໄປເລື້ອຍໆ.

ເພື່ອສືບຕໍ່ປະຕິບັດໜ້າທີ່ການເມືອງອັນມີກຽດຂອງສື່ມວນຊົນລາວ ແນໃສ່ເຮັດໃຫ້ບົດບາດຂອງວຽກງານສື່ມວນຊົນ ໄດ້ກ້າວສູ່ຄຸນນະພາບໃໝ່ ແລະ ມີການຫັນປ່ຽນທີ່ເລິກຊຶ້ງ, ເຖິງຖອງ, ຍົກສູງການຈັດຕັ້ງນຳພາວຽກງານສື່ມວນຊົນ ໃຫ້ກາຍເປັນເຄື່ອງມືອັນແຫຼມຄົມ ແລະ ເປັນຂົວຕໍ່ທີ່ສຳຄັນຂອງພັກ ໃນການໂຄສະນາເຜີຍແຜ່ແນວທາງ, ແຜນນະໂຍບາຍຂອງພັກ-ລັດ ກໍຄືການປະຕິບັດພາລະໜ້າທີ່ຂອງສື່ມວນຊົນ; ທ່ານ ວິໄລ ຫຼ້າຄຳຟອງ ຍັງໄດ້ເນັ້ນບາງຈຸດອັນສຳຄັນດັ່ງນີ້:

1) ກ່ອນອື່ນ, ຂໍສະແດງຄວາມຊົມເຊີຍ ແລະ ເຫັນດີເປັນເອກະພາບສູງຕໍ່ກັບບັນດາຜົນສຳເລັດ ແລະ ຜົນງານໃນດ້ານຕ່າງໆ ທີ່ຂະແໜງການຂົງເຂດສື່ມວນຊົນທົ່ວປະເທດຍາດມາໄດ້ ເຊິ່ງເປັນການຢັ້ງຢືນຢ່າງຈະແຈ້ງຕໍ່ກັບການປະຕິບັດໜ້າທີ່ການເມືອງທີ່ພັກ-ລັດໄດ້ມອບໝາຍໃຫ້ ແລະ ຂໍສະເໜີໃຫ້ບັນດາອົງການຂະແໜງການສື່ມວນຊົນທຸກຂົງເຂດ ຈົ່ງໄດ້ເອົາໃຈໃສ່ຕໍ່ການເສີມຂະຫຍາຍຜົນງານດັ່ງກ່າວ ໃຫ້ນັບມື້ນັບຫຼາຍຂຶ້ນ ທັງມີຄຸນນະພາບໃໝ່ ແລະ ມີການພັດທະນາຢ່າງບໍ່ຢຸດຢັ້ງ ເພື່ອສ້າງໃຫ້ສື່ມວນຊົນເປັນເຄື່ອງມືທີ່ແຫຼມຄົມຂອງພັກເຮົາ.

2) ສືບຕໍ່ເອົາໃຈໃສ່ສ້າງກົນໄກການປະສານງານ, ການສົມທົບກັບບັນດາກະຊວງ-ອົງການ ແລະ ທ້ອງຖິ່ນ ທີ່ຮັບຜິດຊອບວຽກງານສື່ມວນຊົນ ເພື່ອພ້ອມກັນຍົກສູງບົດບາດວຽກງານສື່ມວນຊົນໃຫ້ເຂັ້ມແຂງ, ມີການສະຫຼຸບຖອດຖອນບົດຮຽນ; ປັບປຸງເນື້ອໃນ ແລະ ຮູບການນຳສະເໜີຂ່າວ, ການອອກຂ່າວ, ການວິເຄາະ-ວິຈານຂ່າວ ໃຫ້ມີຄຸນນະພາບ ເຮັດໃຫ້ການຕອບໂຕ້ຂ່າວບິດເບືອນ, ບໍ່ມີມູນຄວາມຈິງ ໄດ້ທັນການ.

3) ຍົກສູງຄວາມຮັບຜິດຊອບ ແລະ ຈັດຕັ້ງຜັນຂະຫຍາຍທິດຊີ້ນຳຂອງສະຫາຍເລຂາທິການໃຫຍ່ຄະນະບໍລິຫານງານສູນກາງພັກ ທີ່ໄດ້ໃຫ້ຄຳໂອ້ລົມຕໍ່ກອງປະຊຸມເພື່ອເປັນທິດທາງໃນການຈັດຕັ້ງປະຕິບັດໜ້າທີ່ການເມືອງຂອງຂະແໜງການສື່ມວນຊົນທົ່ວປະເທດ ໃຫ້: "ທັນການ, ທັນໃຈ, ທັນຍຸກ"; ບັນດາສື່ມວນຊົນ ຈົ່ງພ້ອມກັນປະຕິບັດໃຫ້ເປັນຈິງທິດນຳທີ່ວ່າ: ສື່ມວນຊົນເປັນຜູ້ປາກອອກແສງ, ຜູ້ທີ່ແທງເຖິງໃຈ, ຜູ້ທີ່ສະດຸ້ງໄວເມື່ອອ່ານ, ຜູ້ທີ່ກ້າຜ່ານອຸປະສັກ, ຜູ້ທີ່ຮັກຄວາມຈິງ, ຜູ້ທີ່ຍິງຖືກເປົ້າ" ຖືທັດສະນະຊີ້ນຳນີ້ ເປັນເຂັມທິດຊີ້ບອກທາງຂອງສື່ມວນຊົນພ້ອມກັນປະຕິບັດໃຫ້ປາກົດຜົນເປັນຈິງຢ່າງມີປະສິດທິຜົນສູງ.

4) ສືບຕໍ່ນຳເອົາເນື້ອໃນຈິດໃຈຂອງກອງປະຊຸມວຽກງານສື່ມວນຊົນທົ່ວປະເທດໃນຄັ້ງນີ້ ໄປຈັດຕັ້ງຜັນຂະຫຍາຍເຂົ້າສູ່ລວງເລິກ, ແທດເຖິງຕົວຈິງແລະຫັນເປັນແຜນງານ, ແຜນການ, ວຽກງານອັນລະອຽດໃນແຕ່ລະຂະແໜງການສື່ມວນຊົນທົ່ວປະເທດ ເພື່ອສ້າງການຫັນປ່ຽນໃໝ່ຢ່າງແຂງແຮງ, ມີປະສິດທິຜົນໃນການພັດທະນາວຽກງານສື່ມວນຊົນໃນໄລຍະໃໝ່; ເຮັດໃຫ້ຄາດໝາຍທີ່ວາງໄວ້ໃນປີ 2030 ປາກົດເປັນຈິງ; ບັນດາຖັນແຖວສື່ມວນຊົນ ຈົ່ງຍົກສູງຄວາມຮັບຜິດຊອບການເມືອງ ດຳເນີນການປັບປຸງ, ແກ້ໄຂບັນດາຂໍ້ຄົງຄ້າງໃນໄລຍະຜ່ານມາ ແລະ ພ້ອມກັນເຮັດສຳເລັດໜ້າທີ່ການເມືອງທີ່ໄດ້ຮັບມອບໝາຍໄດ້ສຳເລັດໝາກຜົນ ແລະ ມີການພັດທະນາຍິ່ງໆຂຶ້ນໄປ.

## ປະທານ...

(ຕໍ່ຈາກໜ້າ 1)

ປ້າຍສີຍ້ອງຂາດຈັນຍາບັນຈັນຍາທຳ, ອັນໃດແມ່ນສະແດງອອກເພື່ອການພັດທະນາທີ່ກ້າວໜ້າ, ອັນໃດແມ່ນການທີ່ມີຈຸດປະສົງຢຽບຢ່ຳທຳລາຍຄົນອື່ນເພື່ອເງິນ, ເພື່ອຄວາມມັນ, ເພື່ອຄວາມສະໃຈສ່ວນຕົວ; ພ້ອມນີ້, ສື່ມວນຊົນຕ້ອງບໍ່ຢ້ານກົວທີ່ຈະຕໍ່ສູ້ເພື່ອຄວາມເປັນທຳ ເພື່ອຄວາມສັດທາຂອງປະຊາຊົນ, ຕ້ອງຜ່ານຜ່າໃຫ້ໄດ້ບັນດາບັນຫາທີ່ເປັນອຸປະສັກ ເພື່ອກ້າວເດີນໄປສູ່ການຮັບໃຊ້ປະຊາຊົນ, ຮັບໃຊ້ສັງຄົມ ແນໃສ່ເຮັດໃຫ້ສັງຄົມມີຄວາມສັດທາ, ເຊື່ອໝັ້ນຕໍ່ສື່ມວນຊົນລາວເຮົາ.

ພ້ອມນີ້, ສື່ມວນຊົນຕ້ອງກຽມຄວາມພ້ອມຕໍ່ສູ້ຕະຫຼອດເວລາ, ຕ້ອງບໍ່ຢ້ານກົວທີ່ຈະຕໍ່ສູ້ເພື່ອຄວາມເປັນທຳ, ເພື່ອຄວາມສັດທາຂອງປະຊາຊົນ, ຕ້ອງຜ່ານຜ່າໃຫ້ໄດ້ທຸກໆບັນຫາທີ່ເປັນອຸປະສັກ ເພື່ອກ້າວໄປສູ່ການຮັບໃຊ້ສັງຄົມ ກໍຄືໂຄສະນາເຜີຍແຜ່ຂໍ້ມູນຂ່າວສານຕ່າງໆທີ່ຖືກຕ້ອງ, ຊັດເຈນ ໃຫ້ປະຊາຊົນລາວບັນດາເຜົ່າໄດ້ຮັບຮູ້ຢ່າງທົ່ວເຖິງ; ຕ້ອງໄດ້ຮຽນຮູ້, ປັບປຸງຕົນເອງຢູ່ຕະຫຼອດເວລາ ແລະ ນຳໃຊ້ກາລະໂອກາດທີ່ມີຢູ່ໃຫ້ທັນກັບສະພາບການ, ເຮັດໃຫ້ສື່ມວນຊົນລາວເດີນໜ້າທັນຕາມຍຸກສະໄໝ, ນຳສະເໜີຂໍ້ມູນຂ່າວສານທີ່ເປັນຈິງ ໃຫ້ວ່ອງໄວກວ່າຂ່າວປອມ, ຂ່າວບິດເບືອນຄວາມເປັນຈິງ, ຕ້ອງນຳສະເໜີຂ່າວໃຫ້ມີຄວາມໜັກແໜ້ນ, ກະທັດຮັດ, ແທງເຖິງໃຈຊາວໜຸ່ມໄວໜຸ່ມ ແລະ ປະຊາຊົນລາວບັນດາເຜົ່າ; ຕ້ອງຮັບເອົາຂໍ້ມູນ, ສະຖານະການທີ່ເກີດຂຶ້ນໃນໂລກ, ໃນປະເທດ, ໃນແຕ່ລະຊົ່ວໂມງ, ແຕ່ລະມື້ ມາວິເຄາະວິໄຈ, ຮັບເອົາບັນດາທັດສະນະທີ່ແຕກຕ່າງຕໍ່ແຕ່ລະເຫດການທີ່ເກີດຂຶ້ນມາສົມທຽບ, ຮັບເອົາຄວາມຢາກຮູ້, ຢາກເຂົ້າໃຈຕໍ່ແຕ່ລະເຫດການຂອງຄົນໃນສັງຄົມ ວ່າອັນໃດເປັນຂ່າວປອມ, ຂ່າວລວງ, ຂ່າວອະກຸສົນ, ຮັບມາເພື່ອວິໄຈ ຄົ້ນຄວ້າ, ຮັບເອົາແນວທາງນະໂຍບາຍຂອງພັກ ແລະ ລັດ ມາເປັນບ່ອນອີງໃນການນຳໃຊ້ເຂົ້າໃນການປະຕິບັດໜ້າທີ່ຂອງຕົນ, ຮັບເອົາຄວາມມຸ່ງມາດປາຖະໜາຂອງຄົນໃນສັງຄົມທີ່ຢາກຮູ້ຂໍ້ມູນຂ່າວສານ ແລະ ຮັບເອົາຄຳສະເໜີ, ຄຳຕຳນິຕິຊົມຂອງຄົນໃນສັງຄົມຕໍ່ບຸກຄົນ ຕໍ່ການຈັດຕັ້ງ ແລະ ອື່ນໆ. ພ້ອມນັ້ນ, ຕ້ອງເຜີຍແຜຂ່າວສານທີ່ເກີດຂຶ້ນຢ່າງສົດໆຮ້ອນໆ, ໃຫ້ຂໍ້ມູນທີ່ມີການກວດກາວິໄຈແລ້ວ, ໃຫ້ຄວາມຮູ້ດ້ານຕ່າງໆ ທີ່ບໍ່ມີຄວາມສິ້ນສຸດ ແກ່ຄົນຢ່າງກວ້າງຂວາງ, ໃຫ້ການສຶກສາອົບຮົມຄົນໃນທາງກົງ ແລະ ທາງອ້ອມໄປໃນຕົວ, ໃຫ້ຄຳແນະນຳເພື່ອສ້າງຄວາມມີສະຕິ, ມີຄວາມສະດຸ້ງໄວ, ມີຄວາມລະວັງຕົວ ທີ່ຈະນຳໄປສູ່ສິ່ງທີ່ຖືກຕ້ອງຂອງກະແສສັງຄົມ ໂດຍຫຼີກລ່ຽງການໄປເມົາມົວນຳຂ່າວຄາວທີ່ເປັນພິດໄພ ທີ່ເປັນອັນຕະລາຍຕໍ່ສຸຂະພາບກາຍສຸຂະພາບໃຈຂອງຄົນ.

ທ່ານຍັງໄດ້ສະແດງຄວາມຫວັງວ່າ ທຸກໆການຈັດຕັ້ງຂອງພັກ, ລັດ ທີ່ໄດ້ຮັບມອບໝາຍໃຫ້ເປັນຜູ້ຊີ້ນຳວຽກງານສື່ມວນຊົນ ຈະສືບຕໍ່ໃຫ້ການສະໜັບສະໜູນ, ຊ່ວຍເຫຼືອແກ່ສື່ມວນຊົນລາວ ທັງສູນກາງ ແລະ ທ້ອງຖິ່ນ ເພື່ອພັດທະນາວຽກງານສື່ມວນຊົນ ໃຫ້ມີຄວາມເຂັ້ມແຂງໃນການປະຕິບັດໜ້າທີ່ວຽກງານວິຊາສະເພາະ, ເປັນກະບອກສຽງອັນແຫຼມຄົມໃນການໂຄສະນາເຜີຍແຜ່ຂໍ້ມູນຂ່າວສານຕ່າງໆທີ່ເກີດຂຶ້ນໃນສັງຄົມ ທັງພາຍໃນ ແລະ ຕ່າງປະເທດ ໃຫ້ສັງຄົມລາວໄດ້ຮັບຮູ້ຢ່າງທັນການແລະທົ່ວເຖິງ.

## ພິທີ...

(ຕໍ່ຈາກໜ້າ 1)

(ສພຊ) - ວັນທີ 9 ກໍລະກົດນີ້ ທີ່ສະພາແຫ່ງຊາດ ໄດ້ຈັດພິທີມອບ-ຮັບເງິນ 500 ລ້ານກີບ ເພື່ອສະໜັບສະໜູນກອງປະຊຸມສະໄໝວິສາມັນເທື່ອທີ 1 ຂອງສະພາແຫ່ງຊາດ ຊຸດທີ X, ຕາງໜ້າຮັບໂດຍທ່ານນາງ ສູນທອນ ໄຊຍະຈັກ ຮອງປະທານສະພາແຫ່ງຊາດ ແລະ ຕາງໜ້າມອບໂດຍທ່ານ ກົງເຫວີນຈົງ (Gong Wenzhong) ຜູ້ອຳນວຍການໃຫຍ່ກຸ່ມບໍລິສັດສຽນເສິງ ເຊິ່ງມີທ່ານ ບຸນຈັນ ສີວົງພັນ ຫົວໜ້າຫ້ອງວ່າການສະພາແຫ່ງຊາດແລະພາກສ່ວນທີ່ກ່ຽວຂ້ອງ ເຂົ້າຮ່ວມເປັນສັກຂີພະຍານ.

ໂອກາດນີ້, ທ່ານ ນາງ ສູນທອນ ໄຊຍະຈັກ ໄດ້ມອບໃບຍ້ອງຍໍຂອງປະທານຄະນະປະຈຳສະພາແຫ່ງຊາດ ໃຫ້ບໍລິສັດສຽນເສິງທີ່ມີຜົນງານດີເດັ່ນໃນການປະກອບສ່ວນຄັ້ງນີ້ ເພື່ອເປັນການສັນລະເສີນຜົນງານ ແລະ ຄຸນງາມຄວາມດີ ຢ່າງສົມກຽດ.



## ສູນທອນພົດ...

(ຕໍ່ຈາກໜ້າ 1)

ມາແຕ່ວັນທີ 6 ກໍລະກົດ 2026 ດ້ວຍຈິດໃຈເຄັ່ງຮ້ອນທີ່ເຕັມໄປດ້ວຍບັນຍາກາດຟົດຟື້ນແຫ່ງການເສີມຂະຫຍາຍສິດປະຊາທິປະໄຕ, ການຍົກສູງຄວາມຮັບຜິດຊອບການເມືອງຂອງບັນດາທ່ານສະມາຊິກສະພາແຫ່ງຊາດ, ມາຮອດມື້ນີ້ ໄດ້ບັນລຸຜົນສຳເລັດຕາມຈຸດປະສົງລະດັບຄາດໝາຍທີ່ວາງໄວ້.

ກອງປະຊຸມສະໄໝວິສາມັນເທື່ອທີ 1 ຂອງສະພາແຫ່ງຊາດ ຊຸດທີ X ໄດ້ພິຈາລະນາ, ຮັບຮອງເອົາເນື້ອໃນສຳຄັນຈຳນວນໜຶ່ງດັ່ງນີ້:

1) ພິຈາລະນາ ແລະ ຮັບຮອງເອົາບົດລາຍງານຂອງລັດຖະບານ ກ່ຽວກັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດ, ແຜນເງິນຕາ 6 ເດືອນຕົ້ນປີ 2026 ແລະ ທິດທາງແຜນການ 6 ເດືອນທ້າຍປີ 2026. ກອງປະຊຸມໄດ້ຕີລາຄາສູງຕໍ່ຄວາມພະຍາຍາມຂອງລັດຖະບານ ໃນການບໍລິຫານ, ບັນຊາ ໂດຍໄດ້ນຳໃຊ້ທຸກທ່າແຮງ ແລະ ປຸກລະດົມປະຊາຊົນລາວບັນດາເຜົ່າ ເຂົ້າໃນການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ແຜນງົບປະມານແຫ່ງລັດ ແລະ ແຜນເງິນຕາ ໃນ 6 ເດືອນຕົ້ນປີ 2026 ເຊິ່ງສາມາດເຮັດໃຫ້ເສດຖະກິດຂະຫຍາຍຕົວໃນລະດັບ 5%; ມີການນຳໃຊ້ເຄື່ອງມືທັນສະໄໝໃນການເກັບລາຍຮັບໄດ້ຕາມແຜນ ແລະ ຄາດຄະເນຈະລື່ນແຜນໃນທ້າຍປີ 2026; ອັດຕາເງິນເຟີ້ມີທ່າອຽງຫຼຸດລົງ, ການແກ້ໄຂຄວາມທຸກຍາກໄດ້ຮັບການເອົາໃຈໃສ່ປະກອບສ່ວນຢ່າງຕັ້ງໜ້າ ເຮັດໃຫ້ຊີວິດການເປັນຢູ່ຂອງປະຊາຊົນບັນດາເຜົ່າໄດ້ຮັບການປັບປຸງດີຂຶ້ນເທື່ອລະກ້າວ.

ກອງປະຊຸມສະເໜີໃຫ້ລັດຖະບານເອົາໃຈໃສ່ຊຸກຍູ້ການປະຕິບັດຕາມກົດໝາຍຢ່າງເຂັ້ມງວດ ແລະ ສຸມໃສ່ການເກັບລາຍຮັບດ້ວຍການຫັນເປັນທັນສະໄໝທົ່ວປະເທດ ເຂົ້າສູ່ລະບົບເທື່ອລະກ້າວ, ສາມາດເຊື່ອມຕໍ່ກັບທຸກຂະແໜງການ; ໃຫ້ມີນະໂຍບາຍການດຶງດູດການລົງທຶນທີ່ຊັດເຈນ, ສືບຕໍ່ເກັບລາຍຮັບງົບປະມານຈາກການຂຸດຄົ້ນ ແລະ ສົ່ງອອກແຮ່ທາດໃຫ້ຄົບຖ້ວນຕາມກົດໝາຍ, ຫຼຸດຜ່ອນການຍົກເວັ້ນ ແລະ ຜ່ອນຜັນພາສີ-ອາກອນ ທີ່ຈະເຮັດໃຫ້ລັດເສຍລາຍຮັບງົບປະມານ; ຊຸກຍູ້ສົ່ງເສີມ ແລະ ອຳນວຍຄວາມສະດວກໃນການເຂົ້າຫາແຫຼ່ງທຶນຂອງທຸລະກິດຂະໜາດນ້ອຍ ແລະ ຂະໜາດກາງ, ມີນະໂຍບາຍໃນການນຳໃຊ້ລົດໄຟຟ້າເພື່ອຫຼຸດຜ່ອນລາຍຈ່າຍໃນການຊື້ພະລັງງານເຊື້ອໄຟ, ສືບຕໍ່ດຳເນີນການປະຕິຮູບລັດວິສາຫະກິດ ໃຫ້ມີຄວາມແຂງແຮງ, ມີຄຸນນະພາບແລະມີປະສິດທິຜົນ.

ກອງປະຊຸມສະເໜີໃຫ້ລັດຖະບານເອົາໃຈໃສ່ການສະໜອງແນວພັນ, ການສົ່ງເສີມຜະລິດສິນຄ້າທີ່ເປັນທ່າແຮງຂອງທ້ອງຖິ່ນໃຫ້ສອດຄ່ອງກັບແນວທາງການສ້າງເສດຖະກິດເອກະລາດເປັນເຈົ້າຕົນເອງ, ສົ່ງເສີມພາກເອກະຊົນໃນການຜະລິດຝຸ່ນ, ປຸ໋ຍ ແລະ ອາຫານສັດ ແລະ ມີມາດຕະການຈຳກັດການນຳເຂົ້າສິນຄ້າທີ່ສາມາດຜະລິດໄດ້ພາຍໃນຢ່າງເຂັ້ມງວດ, ປັບປຸງລະບົບຊົນລະປະທານ ເພື່ອສາມາດຮັບໃຊ້ການຜະລິດໃນລະດູແລ້ງ; ເພີ່ມທະວີຄວາມເຂັ້ມງວດໃນການຄຸ້ມຄອງ, ປົກປັກຮັກສາ, ນຳໃຊ້ປ່າໄມ້ ເພື່ອໃຫ້ບັນລຸເນື້ອທີ່ປົກຫຸ້ມຂອງປ່າໄມ້ໄດ້ 65% ໃນປີ 2030, ສຸມໃສ່ການຂຶ້ນສຳມະໂນຄົວທີ່ດິນເພື່ອສ້າງຖານລາຍຮັບໃໝ່, ມີມາດຕະການສົ່ງເສີມການເກັບລາຍຮັບຈາກອາກອນທີ່ດິນດ້ວຍລະບົບທັນສະໄໝ; ມີມາດຕະການເດັດຂາດຕໍ່ການບຸກລຸກທຳລາຍປ່າໄມ້ 3 ປະເພດປ່າ ແລະ ອຸທິຍານແຫ່ງຊາດ, ຕິດຕາມກວດກາໂຄງການໃຫ້ເຊົ່າ ແລະ ສຳປະທານທີ່ດິນຂອງລັດ, ມີການປະເມີນຜົນກະທົບຕໍ່ສິ່ງແວດລ້ອມແລະ ມີມາດຕະການຢ່າງເຂັ້ມງວດຕໍ່ຜູ້ກະທຳຜິດ ແລະ ລະເມີດກົດໝາຍ.

ກອງປະຊຸມສະເໜີໃຫ້ລັດຖະບານເອົາໃຈໃສ່ການສ້ອມແປງເສັ້ນທາງທີ່ເປ່ເພ ໂດຍສະເພາະໃນເຂດຫ່າງໄກສອກຫຼີກຊົນນະບົດ, ເສັ້ນທາງລຽບ ແລະ ອອກສູ່ບໍລິເວນຊາຍແດນ, ທາງຫຼວງແຫ່ງຊາດ, ໂຄງການຟື້ນຟູໄພພິບັດສຸກເສີນ, ໂຄງການການກໍ່ສ້າງຕ້ານເຈື່ອນ, ຄຸ້ມຄອງນ້ຳໜັກລົດບັນທຸກສິນຄ້າຢ່າງເຂັ້ມງວດ, ເດັດຂາດ, ມີມາດຕະການປັບໃໝຕໍ່ຜູ້ປະກອບການທີ່ລະເມີດລະບຽບກົດໝາຍ.

ກອງປະຊຸມສະເໜີໃຫ້ລັດຖະບານປະເມີນການຈັດຕັ້ງປະຕິບັດຄຳສັ່ງສະບັບເລກທີ 06/ນຍ, ເລກທີ 46/ນຍ ແລະ ຄຳສັ່ງສະບັບເລກທີ 11/ກມສພ ຢ່າງເຂັ້ມງວດ, ເພີ່ມທະວີຄວາມເອົາໃຈໃສ່ຕິດຕາມກວດກາປະເມີນຜົນໂຄງການລົງທຶນທັງພາຍໃນ ແລະ ຕ່າງປະເທດ ແລະ ມີມາດຕະການເຂັ້ມງວດຕໍ່ບັນດາບໍລິສັດທີ່ບໍ່ປະຕິບັດຕາມສັນຍາ, ລະບຽບກົດໝາຍ ແລະ ບໍ່ໄດ້ມາດຕະຖານ, ໂຄງການມີຄວາມຄືບໜ້າຊ້າ, ບໍ່ມີປະສິດທິຜົນ; ຢຸດຕິໂຄງການປະເພດ C, C+ ແລະ ແຈ້ງໃຫ້ທ້ອງຖິ່ນຮັບຊາບ ແລະ ມີຄວາມເປັນເອກະພາບໃນການຈັດຕັ້ງປະຕິບັດ; ສະເໜີໃຫ້ພິຈາລະນາຄືນການຂະຫຍາຍຕາຂ່າຍໄຟຟ້າສູ່ຊົນນະບົດ, ສົ່ງເສີມພະລັງງານທາງເລືອກ ເປັນຕົ້ນພະລັງງານລົມ, ແສງຕາເວັນ, ການສະໜອງໄຟຟ້າເພື່ອນຳໃຊ້ເຂົ້າໃນໂຄງການລົງທຶນເພື່ອສາມາດຈັດຕັ້ງປະຕິບັດໂຄງການໄດ້ ແລະ ສາມາດປະຕິບັດພັນທະທາງດ້ານການເງິນໃຫ້ລັດຖະບານ.

ກອງປະຊຸມສະເໜີໃຫ້ລັດຖະບານເພີ່ມທະວີການແກ້ໄຂບັນຫາຄູອາສາສະໝັກ ແລະ ຂາດແຄນຄູ, ການກຳນົດເວລາໃນການປັບປຸງຫຼັກສູດ 6+3+3 ໃຫ້ສາມາດປະຕິບັດໃນສົກຮຽນ 2028-2029; ປັບປຸງຄຸນນະພາບການສຶກສາ, ມີການຈັດສັນໂກຕາລັດຖະກອນໃຫ້ຂະແໜງສຶກສາ ແລະ ສາທາລະນະສຸກໃຫ້ຫຼາຍຂຶ້ນ; ຕິດຕາມ, ຊຸກຍູ້ການຈັດສັນງົບປະມານໃຫ້ແກ່ຂົງເຂດການສຶກສາ, ສາທາລະນະສຸກ ໃຫ້ສົມກັບຄວາມສຳຄັນທີ່ພັກ-ລັດໃຫ້ຄວາມເອົາໃຈໃສ່; ສືບຕໍ່ພັດທະນາສີມືແຮງງານດ້ານຕ່າງໆ ໃຫ້ມີຄຸນນະພາບ, ຕອບສະໜອງໄດ້ຕະຫຼາດແຮງງານພາຍໃນ ແລະ ຕ່າງປະເທດ ແລະ ສືບຕໍ່ຈັດຕັ້ງປະຕິບັດນະໂຍບາຍຕອບແທນບຸນຄຸນຕໍ່ບຸກຄົນ ແລະ ຄອບຄົວທີ່ມີຄຸນງາມຄວາມດີຕໍ່ປະເທດຊາດ.

2) ກອງປະຊຸມພິຈາລະນາແລະຮັບຮອງເອົາວາລະແຫ່ງຊາດ ວ່າດ້ວຍການພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກຂອງປະຊາຊົນເຊິ່ງເປັນການຈັດຕັ້ງຜັນຂະຫຍາຍເນື້ອໃນຈິດໃຈຂອງກອງປະຊຸມໃຫຍ່ ຄັ້ງທີ XII ຂອງພັກວາງອອກ. ກອງປະຊຸມເຫັນດີໂດຍພື້ນຖານຕໍ່ການກຳນົດໂຄງຮ່າງວາລະແຫ່ງຊາດສະບັບນີ້, ເວລາການຈັດຕັ້ງປະຕິບັດແຕ່ປີ 2027-2030 ເຊິ່ງສອດຄ່ອງຕາມແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ X, ເຫັນດີຕໍ່ການກຳນົດທັດສະນະ, ຫຼັກການ, ຄາດໝາຍ, ທິດທາງ, ວຽກຈຸດສຸມໃຫຍ່ ແລະ ມາດຕະການຈັດຕັ້ງປະຕິບັດ ທີ່ລະອຽດສົມຄວນ.

ກອງປະຊຸມສະເໜີລັດຖະບານເອົາໃຈໃສ່ຕື່ມບາງດ້ານເຊັ່ນ: ຄວນມີງົບປະມານເປັນບ້ວງສະເພາະ, ອາດຈະຄົ້ນຄວ້າບ້ວງເງິນເກີນແຜນຂອງແຕ່ລະແຂວງ ແລະ ການປະກອບສ່ວນຂອງປະຊາຊົນ ແລະ ສັງຄົມ, ມີນະໂຍບາຍດຶງດູດການລົງທຶນໃນຂົງເຂດກະສິກຳ-ອຸດສາຫະກຳປຸງແຕ່ງຢູ່ເຂດຊົນນະບົດຫ່າງໄກສອກຫຼີກ, ອຳນວຍຄວາມສະດວກໃຫ້ປະຊາຊົນສາມາດເຂົ້າເຖິງແຫຼ່ງທຶນ ແລະ ສິນເຊື່ອໄດ້ງ່າຍ, ສະດວກ, ວ່ອງໄວແລະມີອັດຕາດອກເບ້ຍທີ່ເໝາະສົມ, ມີການຈັດສັນເຂດການຜະລິດ, ເອົາໃຈໃສ່ການອອກໃບຕາດິນ, ມີການແນະນຳທາງດ້ານເຕັກນິກ, ວິຊາການເຂົ້າໃນວຽກງານການປູກ-ການລ້ຽງ; ສ້າງໂຮງງານປຸງແຕ່ງຕິດພັນກັບຕະຫຼາດ; ສ້າງ ແລະ ປັບປຸງສູນທົດລອງ, ສູນສົ່ງເສີມກະສິກຳ; ສ້າງ ແລະ ສ້ອມແປງເສັ້ນທາງທີ່ເປ່ເພ ໃຫ້ສາມາດນຳໃຊ້ໄດ້ຕະຫຼອດປີ; ສະໜອງໄຟຟ້າ, ນ້ຳສະອາດ, ລະບົບໂທລະຄົມ ແລະ ການສື່ສານໃຫ້ທົ່ວເຖິງ; ປັບປຸງສະຖານການສຶກສາ ແລະ ສະໜອງອຸປະກອນການຮຽນ-ການສອນ, ມີນະໂຍບາຍແກ່ນັກຮຽນທີ່ຮຽນດີ, ຮຽນເກັ່ງ, ຜູ້ທຸກຍາກ ແລະ ດ້ອຍໂອກາດ; ເອົາໃຈໃສ່ການປັບປຸງສຸກສາລາໃຫ້ດີ, ໃຫ້ມີແພດຊ່ວຍການເກີດລູກ ແລະ ສັກຢາວັກຊີນກັນພະຍາດໃຫ້ທົ່ວເຖິງ; ມີການສ້າງວຽກເຮັດງານທຳຢູ່ຊົນນະບົດໃຫ້ແກ່ຊາວໜຸ່ມ, ສ້າງສູນເຝິກອົບຮົມວິຊາອາຊີບໃຫ້ແກ່ຊາວໜຸ່ມ, ປຸກລະດົມການມີສ່ວນຮ່ວມຂອງລະບົບການເມືອງຂັ້ນຮາກຖານເຂົ້າຮ່ວມການພັດທະນາຊົນນະບົດແລະແກ້ໄຂຄວາມທຸກຍາກຂອງປະຊາຊົນ ດ້ວຍການຂົນຂວາຍ, ປຸກລະດົມຈິດໃຈຮັກຊາດ, ຮັກບ້ານເກີດເມືອງນອນ, ສ້າງຄວາມມຸ່ງໝັ້ນໃນການພັດທະນາຂອງປະຊາຊົນ ເພື່ອສ້າງເສດຖະກິດເອກະລາດເປັນເຈົ້າຕົນເອງ.

ເພື່ອບັນລຸເປົ້າໝາຍໃນການພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກຂອງປະຊາຊົນ, ສະເໜີໃຫ້ລັດຖະບານມີກົນໄກປະສານງານກັບ 5 ພາກສ່ວນກ່ຽວຂ້ອງຢ່າງກົມກຽວເຊັ່ນ: ພາກລັດ, ພາກເອກະຊົນຜູ້ປະກອບການ, ພາກສ່ວນທະນາຄານ, ພາກສ່ວນເຕັກໂນໂລຊີ-ວິຊາການ ແລະ ພາກທຸລະກິດ.

3) ກອງປະຊຸມໄດ້ພິຈາລະນາ, ຮັບຮອງເອົາການສ້າງ ແລະ ປັບປຸງກົດໝາຍ 2 ສະບັບໃນນີ້, ກົດໝາຍວ່າດ້ວຍຄັງເງິນແຫ່ງລັດ (ສະບັບສ້າງໃໝ່) ແລະ ກົດໝາຍວ່າດ້ວຍງົບປະມານແຫ່ງລັດ (ສະບັບປັບປຸງ) ເພື່ອໃຫ້ສອດຄ່ອງກັບການຮັບຮອງເອົາວາລະແຫ່ງຊາດ ວ່າດ້ວຍການພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກຂອງປະຊາຊົນ ທັງເປັນການປະກອບສ່ວນສຳຄັນໃນການຄຸ້ມຄອງລັດ, ຄຸ້ມຄອງສັງຄົມດ້ວຍກົດໝາຍ ໃຫ້ເປັນຮູບປະທຳ ແລະ ມີປະສິດທິຜົນຍິ່ງໆຂຶ້ນ.

ກອງປະຊຸມມອບໃຫ້ຄະນະຮັບຜິດຊອບ ນຳເອົາເນື້ອໃນຂອງຮ່າງກົດໝາຍສອງສະບັບໄປຮຽບຮຽງໃຫ້ຄົບຖ້ວນສົມບູນ ເພື່ອໄດ້ປະກາດໃຊ້ໂດຍໄວ ແລະ ນຳໄປສູ່ການຈັດຕັ້ງປະຕິບັດໃຫ້ມີປະສິດພາບ ແລະ ປະສິດທິຜົນເປັນຢ່າງດີ.

4) ກອງປະຊຸມໄດ້ຮັບຟັງການຊີ້ແຈງຕໍ່ຄຳຊັກຖາມຂອງທ່ານນາຍົກລັດຖະມົນຕີ ແລະ ບັນດາທ່ານໃນຄະນະລັດຖະບານທັງໝົດ 9 ທ່ານ ເຊິ່ງເປັນບັນຫາເຄັ່ງຮ້ອນຂອງສັງຄົມ ຕໍ່ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ແຜນງົບປະມານແຫ່ງລັດ, ແຜນເງິນຕາ 6 ເດືອນຕົ້ນປີ ແລະ ທິດທາງແຜນການ 6 ເດືອນທ້າຍປີ 2026 ແລະ ວາລະແຫ່ງຊາດ ວ່າດ້ວຍການພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກຂອງປະຊາຊົນ.

5) ກອງປະຊຸມໄດ້ມີການປຶກສາຫາລື ແລະ ຮັບຮອງເອົາບັນດາບັນຫາທີ່ສຳຄັນຂອງຊາດທີ່ກ່ຽວຂ້ອງກັບວາລະແຫ່ງຊາດ ວ່າດ້ວຍການພັດທະນາຊົນນະບົດ ແລະ ການແກ້ໄຂຄວາມທຸກຍາກຂອງປະຊາຊົນ ແລະກົດໝາຍສອງສະບັບ ໂດຍມີການຮັບຮອງເອົາ 4 ມະຕິທີ່ກ່ຽວຂ້ອງ ດ້ວຍຄະແນນສູງ 90% ຂຶ້ນໄປ.

ການດຳເນີນກອງປະຊຸມສະໄໝວິສາມັນເທື່ອທີ 1 ຂອງສະພາແຫ່ງຊາດ ຊຸດທີ X ຄັ້ງນີ້ ເປັນການຜັນຂະຫຍາຍມະຕິກອງປະຊຸມໃຫຍ່ ຄັ້ງທີ XII ຂອງພັກ, ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ X ເຂົ້າສູ່ວຽກງານຕົວຈິງ, ແມ່ນໝາກຜົນລວມຍອດສະຕິປັນຍາ, ການໃຊ້ສິດປະຊາທິປະໄຕ ກໍຄືຜົນຂອງການຍົກສູງຄວາມຮັບຜິດຊອບທາງການເມືອງຂອງບັນດາທ່ານສະມາຊິກສະພາແຫ່ງຊາດ, ການຕັດສິນໃຈສູງຂອງລັດຖະບານ, ອົງການລັດທີ່ກ່ຽວຂ້ອງທີ່ມີຄວາມພະຍາຍາມ ແລະ ມີມາດຕະການຕົວຈິງ ໃນການແກ້ໄຂຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນໃຫ້ຕົກໄປເທື່ອລະກ້າວ, ເພື່ອສ້າງຄວາມເຊື່ອໝັ້ນໃຫ້ປະຊາຊົນຕໍ່ການນຳພາຂອງພັກ ແລະ ລັດເຮົາ ໃນພາລະກິດປົກປັກຮັກສາ ແລະ ພັດທະນາປະເທດຊາດ ໃຫ້ມີຄວາມໜັກແໜ້ນຂຶ້ນເລື້ອຍໆ.

ກອງປະຊຸມສະໄໝວິສາມັນເທື່ອທີ 1 ຂອງສະພາແຫ່ງຊາດ ຊຸດທີ X ໄດ້ຮັບຜົນສຳເລັດຢ່າງຈົບງາມ ກໍຍ້ອນມີການຊີ້ນຳຢ່າງໃກ້ຊິດຈາກກົມການເມືອງ ແລະ ຄະນະເລຂາທິການສູນກາງພັກ, ຍ້ອນຄວາມຮັບຜິດຊອບສູງຂອງລັດຖະບານ, ບັນດາກະຊວງ, ອົງການ ແລະ ຂະແໜງການກ່ຽວຂ້ອງ ແລະ ການປະສານງານຢ່າງກົມກຽວລະຫວ່າງລັດຖະບານ ແລະ ສະພາແຫ່ງຊາດ.

ຂໍສະແດງຄວາມຂອບໃຈເປັນຢ່າງສູງມາຍັງບັນດາການນຳພັກ-ລັດ, ສູນກາງແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າລາວ ແລະ ອົງການຈັດຕັ້ງມະຫາຊົນຂັ້ນສູນກາງ, ບັນດາທູຕານຸທູດ ແລະ ການຈັດຕັ້ງສາກົນ ທີ່ໄດ້ໃຫ້ກຽດເຂົ້າຮ່ວມກອງປະຊຸມ ແລະ ຂອບໃຈມາຍັງປະຊາຊົນລາວບັນດາເຜົ່າຢູ່ພາຍໃນປະເທດ ແລະ ຊາວລາວຢູ່ຕ່າງປະເທດ ທີ່ໄດ້ຕິດຕາມກອງປະຊຸມຂອງພວກເຮົາໃນຄັ້ງນີ້ ຢ່າງຈົດຈໍ່ ແລະ ສົ່ງຄຳຄິດເຫັນຜ່ານໂທລະສັບສາຍດ່ວນມາຍັງກອງປະຊຸມຢ່າງຫຼວງຫຼາຍ.

ຂໍສະແດງຄວາມຂອບ

ອ່ານຕໍ່ໜ້າ 5





## ຄະນະ...

(ຕໍ່ຈາກໜ້າ 2)

ໝັ້ນຄົງ, ພິຈາລະນາຮັບຮອງກຳນົດສະຖານທີ່, ວັນ ແລະ ເວລາ ຈັດກອງປະຊຸມສະມັດຊາໃຫຍ່ APF ຄັ້ງທີ 52 ໃນປີ 2027 ແລະ ຄັ້ງທີ 53 ໃນປີ 2028.

ໃນການເຂົ້າຮ່ວມກອງປະຊຸມ, ຄະນະຜູ້ແທນສະພາແຫ່ງຊາດລາວ ໄດ້ຂຶ້ນກ່າວປົດປາໄສໃນຫົວຂໍ້ "ການພົວພັນພະຫຸພາຄີ ແລະ ອະທິປະໄຕຂອງລັດ" ເຊິ່ງເນັ້ນເຖິງການຮ່ວມມືແບບຫຼາຍຝ່າຍ ແມ່ນກົນໄກໜຶ່ງທີ່ສຳຄັນໃນການຮັກສາສັນຕິພາບ, ສະຖຽນລະພາບ ແລະ ການພັດທະນາຢ່າງຍືນຍົງ ພ້ອມທັງຢືນຢັນວ່າ ສປປລາວ ໃຫ້ຄວາມສຳຄັນຕໍ່ການບັນລຸເປົ້າໝາຍການພັດທະນາແບບຍືນຍົງ (Sustainable Development Goals - SDGs), ການເສີມສ້າງນິຕິທຳ ແລະ ການຮ່ວມມືສາກົນຢ່າງຕໍ່ເນື່ອງ ໂດຍຢຶດໝັ້ນໃນຫຼັກການພະຫຸພາຄີ ແລະ ຮຽກຮ້ອງໃຫ້ປະຊາຄົມໂລກທັງໝົດ ຮ່ວມກັນເສີມສ້າງການເຈລະຈາ, ຄວາມສາມັກຄີທີ່ເປັນນໍ້າໜຶ່ງໃຈດຽວກັນ ແລະ ການຮ່ວມມືເພື່ອສ້າງອະນາຄົດແຫ່ງສັນຕິພາບ, ສະຖຽນລະພາບ ແລະ ຄວາມຈະເລີນຮຸ່ງເຮືອງຮ່ວມກັນສຳລັບທຸກປະເທດ ແລະ ປະຊາຄົມໂລກ.

ຂະນະດຽວກັນ, ກອງປະຊຸມສະມັດຊາໃຫຍ່ລັດຖະສະພາຊາວໜຸ່ມທີ່ໃຊ້ພາສາຝຣັ່ງ ກໍໄດ້ດຳເນີນໄປພາຍໃຕ້ຫົວຂໍ້ຕົ້ນຕໍ "ການປ່ຽນແປງສະພາບດິນຟ້າອາກາດ, ການພັດທະນາແລະຄວາມສາມັກຄີບັນດາປະເທດທີ່ໃຊ້ພາສາຝຣັ່ງ: ໃນໂລກທີ່ປະເຊີນກັບວິກິດການຫຼາຍຢ່າງ, ຄຳໝັ້ນສັນຍາແບບໃດທີ່ຈຳເປັນ? (Changement climatique, développement et solidarité francophone: quels engagements dans un monde traversé par les crises ?)" ແລະ ແລກປ່ຽນປະກອບຄຳເຫັນໃສ່ຮ່າງມະຕິ ພາຍໃຕ້ 4 ຫົວຂໍ້ຍ່ອຍສຳຄັນເຊັ່ນ: "ການຮ່ວມມືສາກົນເພື່ອຮັບມືກັບຄວາມທ້າທາຍຂອງຜູ້ພັດຖິ່ນຍ້າຍຖານອັນເນື່ອງມາຈາກການປ່ຽນແປງສະພາບອາກາດ", "ການມີສ່ວນຮ່ວມຕາມຫຼັກປະຊາທິປະໄຕຂອງໄວໜຸ່ມໃນປະຊາຄົມຝຣັ່ງໂກໂຟນ", "ສື່ສັງຄົມອອນລາຍ ແລະ ໄວໜຸ່ມ: ຈະບໍລິຫານ ແລະ ສົ່ງເສີມການນຳໃຊ້ຢ່າງເໝາະສົມໄດ້ແນວໃດ?" ແລະ "ການມີສ່ວນຮ່ວມຂອງໄວໜຸ່ມ ໃນຂະບວນການສ້າງສັນຕິພາບ ແລະ ການປ້ອງກັນຄວາມຂັດແຍ້ງ", ເຊິ່ງທ່ານ ນາງ ສຸມານາ ນໍຣິນ ແລະ ທ່ານ ສຸກັນຍາ ໄຊຍະແສງ ນັກສຶກສາຈາກພາກວິຊາພາສາຝຣັ່ງ ຄະນະອັກສອນສາດ ມະຫາວິທະຍາໄລແຫ່ງຊາດ, ຕາງໜ້າຄະນະຊາວໜຸ່ມຂອງສະພາແຫ່ງຊາດລາວ ກໍໄດ້ປະກອບສ່ວນຈົ່ມສຸດກົກສຸດປາຍ ແລະ ແລກປ່ຽນປະກອບຄຳເຫັນໃນທຸກຫົວຂໍ້ຢ່າງຕັ້ງໜ້າ.

ໃນຕອນທ້າຍຂອງກອງປະຊຸມ ໄດ້ມີການຮັບຮອງກຳນົດການຈັດກອງປະຊຸມສະມັດຊາໃຫຍ່ APF ຄັ້ງທີ 52 ໃນລະຫວ່າງວັນທີ 5-9 ກໍລະກົດ 2027 ທີ່ປະເທດລຸກຊຳບວກ ແລະ ຄັ້ງທີ 53 ໃນປີ 2028 ທີ່ເກເບັກ (Quebec), ປະເທດການາດາ; ພ້ອມດຽວກັນນີ້, ກໍໄດ້ມີພິທີມອບ-ຮັບຕຳແໜ່ງປະທານສະມັດຊາລັດຖະສະພາປະເທດທີ່ໃຊ້ພາສາຝຣັ່ງຜູ້ໃໝ່ສົກປີ 2026-2028 ໂດຍໄດ້ຮັບຮອງ ແລະ ແຕ່ງຕັ້ງທ່ານ ນາງ ນາຕາລີລອຍ(NathalieRoy) ຮອງປະທານສະພາຜູ້ທີ 1, ປະທານຄະນະສະມັດຊາລັດຖະສະພາປະເທດທີ່ໃຊ້ພາສາຝຣັ່ງຂອງສະພາແຫ່ງຊາດເກເບັກ ດຳລົງຕຳແໜ່ງເປັນປະທານ APF ຜູ້ໃໝ່ຢ່າງເປັນທາງການ.

## ສູນທອນພັດ...

(ຕໍ່ຈາກໜ້າ 4)

ໃຈຕໍ່ທຸກພາກສ່ວນກ່ຽວຂ້ອງທີ່ໄດ້ມີສ່ວນຮ່ວມໃນຜົນສຳເລັດຂອງກອງປະຊຸມສະໄໝວິສາມັນເທື່ອທີ 1 ຂອງສະພາແຫ່ງຊາດ ຊຸດທີ X ເປັນຕົ້ນ ກອງເລຂານຸການກອງປະຊຸມທີ່ເອົາໃຈໃສ່ຮັບຜິດຊອບເນື້ອໃນ, ວຽກບໍລິຫານ-ພິທີການຮອບດ້ານດ້ວຍຄວາມຫ້າວຫັນ ແລະ ມີຄວາມຮັບຜິດຊອບສູງ; ຂໍຂອບໃຈຕໍ່ກຳລັງປ້ອງກັນຊາດ-ປ້ອງກັນຄວາມສະຫງົບ, ແພດໝໍ ທີ່ໄດ້ປະກອບສ່ວນເຮັດໃຫ້ກອງປະຊຸມມີຄວາມປອດໄພທຸກປະການ ແລະ ຂອບໃຈຕໍ່ບັນດາສື່ມວນຊົນທີ່ໄດ້ເອົາໃຈໃສ່ເຜີຍແຜ່ການດຳເນີນກອງປະຊຸມສະພາແຫ່ງຊາດ ໃຫ້ສັງຄົມໄດ້ເຂົ້າເຖິງ ແລະ ຕິດຕາມຢ່າງຕໍ່ເນື່ອງ, ທັນເວລາ.

ກອງປະຊຸມມອບໃຫ້ຄະນະປະຈຳສະພາແຫ່ງຊາດ, ບັນດາກຳມາທິການ, ຫ້ອງວ່າການສະພາແຫ່ງຊາດ, ຄະນະສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງ, ສະມາຊິກສະພາແຫ່ງຊາດ, ລັດຖະບານ, ອົງການທີ່ກ່ຽວຂ້ອງ, ອົງການປົກຄອງທ້ອງຖິ່ນ ແລະ ທຸກພາກສ່ວນທີ່ກ່ຽວຂ້ອງ ຈົ່ງໄດ້ຜັນຂະຫຍາຍມະຕິກອງປະຊຸມສະພາແຫ່ງຊາດຄັ້ງນີ້ເຂົ້າໃນການປະຕິບັດວຽກງານຂອງແຕ່ລະພາກສ່ວນ ໃຫ້ໄດ້ຮັບຜົນສຳເລັດເປັນຢ່າງດີ.

ສຸດທ້າຍນີ້, ຂ້າພະເຈົ້າຕາງໜ້າໃຫ້ຜູ້ແທນກອງປະຊຸມສະໄໝວິສາມັນເທື່ອທີ 1 ຂອງສະພາແຫ່ງຊາດ ຊຸດທີ X ຂໍອວຍພອນໄຊອັນປະເສີດມາຍັງທ່ານເລຂາທິການໃຫຍ່ຄະນະບໍລິຫານງານສູນກາງພັກ, ປະທານປະເທດ ແຫ່ງ ສປປລາວ ຈົ່ງມີສຸຂະພາບແຂງແຮງ, ມີຄວາມຜາສຸກໃນຊີວິດຄອບຄົວ, ມີຜົນສຳເລັດໃໝ່ໃຫຍ່ຫຼວງກວ່າເກົ່າໃນການຊີ້ນຳ-ນຳພາປະເທດຊາດ ໃຫ້ມີການພັດທະນາ ກ້າວຂຶ້ນສູ່ຈຸດໝາຍທີ່ພັກເຮົາໄດ້ວາງໄວ້ຢ່າງໜັກແໜ້ນ.

ຂໍອວຍພອນໃຫ້ບັນດາການນຳຂັ້ນສູງພັກ-ລັດ, ອະດີດການນຳພັກ-ລັດ, ສະມາຊິກສະພາແຫ່ງຊາດ, ສະມາຊິກລັດຖະບານຕະຫຼອດຮອດພະນັກງານ, ທະຫານຕຳຫຼວດ ແລະ ປະຊາຊົນລາວບັນດາເຜົ່າໃນທົ່ວປະເທດ ຈົ່ງມີສຸຂະພາບເຂັ້ມແຂງ, ປະສົບຜົນສຳເລັດໃນໜ້າທີ່ວຽກງານອັນມີກຽດສະຫງ່າຂອງຕົນ.

ໃນໂອກາດອັນສະຫງ່າລາສີນີ້, ຂ້າພະເຈົ້າຂໍປະກາດປິດກອງປະຊຸມສະໄໝວິສາມັນເທື່ອທີ 1 ຂອງສະພາແຫ່ງຊາດ ຊຸດທີ X ຢ່າງເປັນທາງການນັບແຕ່ເວລານີ້ເປັນຕົ້ນໄປ.

## ອາດ ກະວີລາວ

# ສ່ຽວຊີ

**# ສີວິໄລ ປັນແກ້ວ**

❉ ສ່ຽວຊີໄດ້
ຕາມຕຳລາ
ເມື່ອພະເຫວດ
ແສນສຳລານ

ໃບທີສິບສາມ
ວ່າດີວິເສດ
ລຸລ່ວງບຳນານ
ທ່ານມີບຸນມາກ

❉ ບໍ່ລຳບາກ
ບໍ່ໄດ້ສິນ
ບໍ່ໄດ້ເມື່ອຍ
ບໍ່ໄດ້ເຄືອງ

ປາກປຽກນຳຄົນ
ປະຊຸມເລື້ອຍໆ
ນັ່ງຮຽນການເມືອງ
ນຳວຽກເພີ່ມມອບ

❉ ແນວຊອບ-ແຊບ
ຢາກຫລິ້ນທ່ຽວ
ຄົນເຮົາເກີດ
ຢ່າໄປກ່ຽວ

ຮີບຫາມາກິນ
ກໍຕາມໃຈເຖີດ
ມາແຕ່ເທື່ອດຽວ
ນຳເລື່ອງເຈັບຫົວ

❉ ມ່ວນຊວນຫົວ
ອາຍຸຮອດ
ສອນລູກຫລານ
ຮູ້ປົດເປື້ອງ
ຈະເປັນສຸກ

ລື່ນເລີງຕະຫລອດ
ຈຶ່ງໄດ້ບຳນານ
ໃຫ້ເຮົາໄດ້ເພິ່ງ
ອະບາຍຍະມຸກ
ຕະຫລອດຊີວາ...



## ຫັກຫາຍ ລະບາຍ

*(ເລື່ອງເບົາໆ ເອົ້າແບບກັນເອງ ບໍ່ເຄັ່ງພິທີການ)*

**# ສຽມທ້ຽນ**

❉ **ຈົ່ມ**ເຊີຍອັບສ້າງຕັ້ງສະຫະພັນແມ່ຍິງລາວ ທີ່ໝູນວຽນມາບັນຈົບຄົບຮອບ **71 ປີ** (20 ກໍລະກົດ 1955-20 ກໍລະກົດ 2026) ແມ່ຍິງລາວເອກອ້າງ ຜົນງານໃຫຍ່ມີມາ ຄົບຮອບເຈັດສິບເອັດປີ ເພີ່ມພູນຄູນສ້າງ ວາງຮາກຖານແນວທາງໃຫ້ ອັດທະບະທ່າສືບເນື່ອງ ຊື່ສຽງດັງກຶກກ້ອງ ໂລກາຍ້ອງຊື່ນຊົມ **ນັບແລ້ວ!**

❉ **ຕາມ**ຂ່າວໃຫ້ຮູ້ວ່າ ໃນຊ່ວງໄລຍະທີ່ຜ່ານມາ ເຈົ້າໜ້າທີ່ສາມາດຫັບມ້າງກຸ່ມແກ໊ງຄ່ໍເງິນເຕີ ໄດ້ຢ່າງຫຼວງຫຼາຍໃນຂອບເຂດທົ່ວປະເທດ ປະຊາພົງພີ່ນ້ອງ ຈົ່ມຊື່ນດີໃຈ ໃນຮູບການປະຕິບັດງານ ກອດກາສະກັດກັ້ນ ຕ້ານປາກົດການຫຍໍ້ທໍ້ຕໍ່ປ່ອງປະຊາລາດ ເຮັດໃຫ້ພີ່ນ້ອງລາວກ້າວພັດທະນາ **ຊອບແລ້ວ!**

## ຊວນຍິ້ມ

**# ພົ້ງອຶ່ງ**

### ເລື່ອງ: ບາງຍັກ

ຫຼັງຈາກກັບຈາກໂຮງຮຽນ, ລູກສາວໄດ້ຖາມຜູ້ເປັນພໍ່ວ່າ:

**ລູກສາວ:** ພໍ່ໆ...ລູກບໍ່ເຂົ້າໃຈ, ເປັນຫຍັງໃນນິທານບາງຍັກຈຶ່ງມີລູກສາວເປັນຄົນ, ຄືບໍ່ເປັນຍັກ?

**ພໍ່:** ທຸກເລື່ອງກໍ່ຕ້ອງເປັນແບບນັ້ນແຫຼະ ເພື່ອທີ່ຈະໄດ້ມີເຈົ້າຊາຍມາຂໍແຕ່ງດອງບ່າເດ

**ລູກ:** ແລ້ວຫຼັງຈາກນັ້ນເດ ເປັນຈັ່ງໃດຕໍ່?

**ພໍ່:** ພໍແຕ່ງດອງໄປ, ຍິງສາວກໍຈະຄ່ອຍໆກາຍເປັນບາງຍັກເອງ



## ສຸພາສິດ-ຄະຕິເຕືອນໃຈ

**#ດອກຫຍ້າ**

"ບຸນບໍ່ໃຫ້ຍອຍໄຮ່ກໍບໍ່ຍອຍ ບຸນບໍ່ໃຫ້ໂກ້ກໍເລົ່າໄກ"

## ລັດຖະສະພາຕ່າງປະເທດ

# ອິດສະຣາແອນ ຈະຈັດການເລືອກຕັ້ງທົ່ວໄປ ໃນວັນທີ 27 ຕຸລາ



(Xinhua) - ພັກຮ່ວມລັດຖະບານຂອງອິດສະຣາແອນປະກາດເມື່ອວັນອາທິດທີ 12 ກໍລະກົດນີ້ວ່າການເລືອກຕັ້ງທົ່ວໄປສຳລັບລັດຖະສະພາຂອງປະເທດ ຈະຈັດຂຶ້ນຕາມກຳນົດໄວ້ໃນວັນທີ 27 ຕຸລາ 2026 ແລະຈະບໍ່ເລື່ອນໃຫ້ໄວຂຶ້ນ.

ຕາມກົດໝາຍຂອງອິດສະຣາແອນ, ການເລືອກຕັ້ງທົ່ວໄປສຳລັບລັດຖະສະພາ ຈະຈັດຂຶ້ນທຸກໆສີ່ປີ.

ໄລຍະເວລາການເລືອກຕັ້ງ ຈະເລີ່ມຕົ້ນຢ່າງເປັນທາງການໃນວັນທີ 17 ກໍລະກົດ, ເມື່ອລັດຖະສະພາເຂົ້າສູ່ໄລຍະພັກການປະຊຸມ; ນັບຈາກນັ້ນເປັນຕົ້ນໄປ, ລັດຖະບານຈະເຂົ້າສູ່ສະຖານະຮັກສາການ ແລະ ຈະບໍ່ສາມາດປະຕິບັດນະໂຍບາຍທີ່ສຳຄັນໃດໆໄດ້ ຍົກເວັ້ນກົດໝາຍທີ່ໄດ້ຕົກລົງກັນໂດຍທົ່ວໄປ, ລະບຽບການປົກກະຕິ ຫຼື ມາດຕະການທີ່ຈຳເປັນເພື່ອແກ້ໄຂບັນຫາຄວາມໝັ້ນຄົງ.

ນາຍົກລັດຖະມົນຕີອິດສະຣາແອນ ເບັນຈາມິນ ເນທັນຢາຮູກ່າວໃນການຖະແຫຼງຂ່າວເມື່ອເດືອນມິຖຸນາວ່າ ຫຼັງຈາກການເລືອກຕັ້ງທົ່ວໄປທີ່ຄາດວ່າຈະຈັດຂຶ້ນໃນເດືອນຕຸລາ, ເຂົາຕ້ອງການສ້າງຕັ້ງລັດຖະບານແຫ່ງຊາດທີ່ມີຂອບເຂດກວ້າງຂວາງ.

ປັດຈຸບັນ, ເນທັນຢາຮູເປັນຜູ້ນຳລັດຖະບານປະສົມທີ່ປະກອບດ້ວຍພັກການເມືອງຝ່າຍຂວາຈັດ ແລະ ກຸ່ມອໍໂທ ດັອກທີ່ຮຸນແຮງ (ultra-Orthodox); ຜົນສຳຫຼວດຄວາມຄິດເຫັນຫຼ້າສຸດໃນສື່ມວນຊົນອິດສະຣາແອນຄາດຄະເນວ່າ ພັກການເມືອງໃນລັດຖະບານປະສົມຊຸດປັດຈຸບັນ ຈະໄດ້ຮັບຢ່າງຫຼາຍທີ່ສຸດ 53 ທີ່ນັ່ງ ໃນລັດຖະສະພາທີ່ມີ 120 ທີ່ນັ່ງ, ເຊິ່ງບໍ່ພຽງພໍທີ່ຈະເຮັດໃຫ້ເຂົາສາມາດສ້າງຕັ້ງລັດຖະບານປະສົມໄດ້ອີກຄັ້ງໃນໂຄງສ້າງປັດຈຸບັນ.

# Guinea-Bissau ຈະລົງປະຊາມະຕິ ລັດຖະທຳມະນູນ ໃນວັນທີ 30 ສິງຫາ




(Xinhua) - ຮໍຕາ ອິນຕາ-ເອ (Horta Inta-A) ປະທານາທິບໍດີຮັກສາການ ແຫ່ງ ສາທາລະນະລັດກິເນ-ບິດຊາວ ໄດ້ປະກາດຈັດການລົງປະຊາມະຕິທົ່ວປະເທດ ໃນວັນທີ 30 ສິງຫານີ້ ເພື່ອຕັດສິນໃຈວ່າຈະນຳເອົາລັດຖະທຳມະນູນສະບັບໃໝ່ທີ່ໄດ້ຮັບການອະນຸມັດຈາກສະພາປ່ຽນຜ່ານແຫ່ງຊາດ (National Transitional Council - NTC) ມາບັງຄັບໃຊ້ ຫຼືບໍ່, ຕາມລັດຖະດຳລັດທີ່ເຜີຍແຜ່ເມື່ອວັນຈັນທີ 6 ກໍລະກົດ 2026.

ພາຍໃຕ້ລັດຖະດຳລັດ, ການລົງປະຊາມະຕິຈະຈັດຂຶ້ນໂດຍຜູ້ມີສິດເລືອກຕັ້ງຈະລົງຄະແນນສຽງ "ເຫັນດີ" ຫຼື "ຄັດຄ້ານ" ວ່າລັດຖະທຳມະນູນຄວນຖືກບັງຄັບໃຊ້ຫຼືບໍ່; ການຕັດສິນໃຈດັ່ງກ່າວ ມີຂຶ້ນຫຼັງຈາກຂໍ້ສະເໜີສຳລັບການລົງປະຊາມະຕິໄດ້ຮັບການອະນຸມັດຈາກສານສູງສຸດ.

NTC ເຮັດໜ້າທີ່ເປັນອົງການນິຕິບັນຍັດຂອງປະເທດນັບຕັ້ງແຕ່ການຍຶດອຳນາດໂດຍທະຫານໃນເດືອນພະຈິກ 2025.

ອຳນາດການປົກຄອງຮັກສາການຂອງກິເນ-ບິດຊາວໄດ້ປະກາດໃນເດືອນມັງກອນວ່າ ການເລືອກຕັ້ງປະທານາທິບໍດີ ແລະ ສະພານິຕິບັນຍັດ ມີກຳນົດຈະຈັດຂຶ້ນໃນວັນທີ 6 ທັນວານີ້, ຂະນະທີ່ປະເທດພະຍາຍາມກັບຄືນສູ່ລະບຽບລັດຖະທຳມະນູນ.

# ມົງໂກລີ ອອກກົດໝາຍ ການປ່ຽນແປງສະພາບອາກາດ




(Xinhua) - ກະຊວງສິ່ງແວດລ້ອມ ແລະ ການປ່ຽນແປງສະພາບອາກາດຂອງມົງໂກລີ ປະກາດເມື່ອວັນພະຫັດທີ 2 ກໍລະກົດນີ້ວ່າ ສະພາຄູຣານໃຫຍ່ເຊິ່ງເປັນລັດຖະສະພາແບບສະພາດຽວຂອງປະເທດ ໄດ້ອະນຸມັດກົດໝາຍ ການປ່ຽນແປງສະພາບອາກາດສະບັບທຳອິດຂອງປະເທດ; ເຊນຊານດາກ-ໂອຊີຣ໌ (Tsend Sandag-Ochir) ລັດຖະມົນຕີກະຊວງສິ່ງແວດລ້ອມ ແລະ ການປ່ຽນແປງສະພາບອາກາດກ່າວໃນການຖະແຫຼງຂ່າວວ່າ ກົດໝາຍສະບັບນີ້ ໄດ້ກຳນົດຂອບກົດໝາຍເພື່ອແກ້ໄຂບັນຫາການປ່ຽນແປງສະພາບອາກາດ ແລະ ຈັດຕັ້ງປະຕິບັດນະໂຍບາຍດ້ານສະພາບອາກາດ ແລະ ການພັດທະນາແບບຍືນຍົງໃນໄລຍະຍາວຂອງປະເທດ.

ກົດໝາຍສະບັບນີ້ ມີ 9 ພາກ ແລະ 32 ມາດຕາ, ເປັນພື້ນຖານທາງກົດໝາຍສຳລັບການປະສານງານຄວາມພະຍາຍາມເພື່ອຫຼຸດຜ່ອນແລະປັບຕົວຕໍ່ການປ່ຽນແປງສະພາບອາກາດ, ຫຼຸດການປ່ອຍອາຍພິດເຮືອນແກ້ວ, ສົ່ງເສີມການພັດທະນາສີຂຽວ, ແລະ ປະຕິບັດພັນທະສາກົນດ້ານສະພາບອາກາດຂອງມົງໂກລີ; ນອກຈາກນີ້, ຍັງກຳນົດລະບຽບການກ່ຽວກັບການເງິນດ້ານສະພາບອາກາດ, ຕະຫຼາດຄາບອນ, ບັນຊີລາຍການອາຍພິດເຮືອນແກ້ວ, ກົນໄກການລາຍງານ ແລະ ຄວາມໂປ່ງໃສ.

ກະຊວງດັ່ງກ່າວລະບຸວ່າ ກົດໝາຍສະບັບໃໝ່ນີ້ ແມ່ນບາດກ້າວສຳຄັນໃນການສົ່ງເສີມການຫັນປ່ຽນມົງໂກລີໄປສູ່ເສດຖະກິດສີຂຽວ, ເສີມສ້າງຄວາມຢືດຢຸ່ນຕໍ່ສະພາບອາກາດ ແລະ ຂະຫຍາຍການຮ່ວມມືສາກົນ; ກົດໝາຍສະບັບນີ້, ຍັງເປັນຕົວແທນໃຫ້ແກ່ການປະຕິຮູບກົດໝາຍທີ່ສຳຄັນກ່ອນທີ່ມົງໂກລີຈະເປັນເຈົ້າພາບຈັດກອງປະຊຸມພາຄີຄັ້ງທີ 17 (COP17) ຂອງອະນຸສັນຍາສະຫະປະຊາຊາດວ່າດ້ວຍການຕ້ານການແຜ່ຂະຫຍາຍຂອງທະເລຊາຍ ໃນເດືອນສິງຫານີ້.

ມົງໂກລີ ແມ່ນໜຶ່ງໃນປະເທດທີ່ມີຄວາມສ່ຽງຫຼາຍທີ່ສຸດຕໍ່ຜົນກະທົບຂອງການປ່ຽນແປງສະພາບອາກາດ.

ຕາມຂໍ້ມູນຂອງກະຊວງສິ່ງແວດລ້ອມ ແລະ ການປ່ຽນແປງສະພາບອາກາດ, ປະມານ 77% ຂອງເນື້ອທີ່ທັງໝົດຂອງປະເທດອາຊີແຫ່ງນີ້ ໄດ້ຮັບຜົນກະທົບຈາກການແຜ່ຂະຫຍາຍຂອງທະເລຊາຍ ແລະ ການເສື່ອມໂຊມຂອງດິນ.

# Palestine ຈະເລືອກຕັ້ງສະພາ ນິຕິບັນຍັດ ໃນວັນທີ 28 ພະຈິກ

(Xinhua) - ມາມູດ ອັບບາສ (MahmoudAbbas) ປະທານາທິບໍດີ ແຫ່ງລັດປາແລັດສະຕິນ ໄດ້ອອກລັດຖະດຳລັດໃນວັນພະຫັດທີ 9 ກໍລະກົດ 2026 ກຳນົດວັນທີ 28 ພະຈິກ ເປັນວັນເລືອກຕັ້ງສະພານິຕິບັນຍັດ, ໂດຍການເລືອກຕັ້ງປະທານາທິບໍດີ ຈະຈັດຂຶ້ນໃນໄຕມາດທຳອິດຂອງປີ 2027.

ລັດຖະດຳລັດດັ່ງກ່າວຮຽກຮ້ອງໃຫ້ຊາວປາແລັດສະຕິນໃນເຢຣູຊາເລັມ, ເວສຕ໌ແບງກ໌ ແລະ ກາຊາ ເຂົ້າຮ່ວມການເລືອກຕັ້ງສະພານິຕິບັນຍັດທີ່ເສລີແລະ ໂດຍກົງເພື່ອເລືອກສະມາຊິກສະພານິຕິບັນຍັດປາແລັດສະຕິນ.

ກາງເດືອນມິຖຸນາຜ່ານມາ, ອັບບາສ ໄດ້ອອກລັດຖະດຳລັດປັບປຸງກົດໝາຍການເລືອກຕັ້ງທົ່ວໄປ ໂດຍເພີ່ມຈຳນວນທີ່ນັ່ງໃນສະພານິຕິບັນຍັດ ເປັນ 200 ທີ່ນັ່ງ, ຫຼຸດເກນຄະແນນສຽງຂັ້ນຕ່ຳເຫຼືອ 1% ແລະ ເພີ່ມຈຳນວນຜູ້ສະໝັກຂັ້ນຕ່ຳຕໍ່ລາຍຊື່ ຈາກ 16 ເປັນ 20 ຄົນ; ການປັບປຸງດັ່ງກ່າວ ຍັງກຳນົດໃຫ້ມີແມ່ຍິງຢ່າງໜ້ອຍໜຶ່ງຄົນໃນບັນດາຜູ້ສະໝັກທຸກໆສາມຄົນແລະ ຫຼຸດອາຍຸຂັ້ນຕ່ຳຂອງຜູ້ສະໝັກ ຈາກ 28 ເປັນ 23 ປີ.

ການເລືອກຕັ້ງສະພານິຕິບັນຍັດຄັ້ງຫຼ້າສຸດ ໄດ້ຈັດຂຶ້ນໃນເດືອນມັງກອນ 2006, ການເລືອກຕັ້ງຕໍ່ໆມາ ຖືກເລື່ອນອອກໄປທ່າມກາງຄວາມແບ່ງແຍກທາງການເມືອງລະຫວ່າງກຸ່ມຟາຕາ (Fatah) ແລະ ກຸ່ມຮາມາສ (Hamas).



# ລັດເຊຍ ຜ່ານກົດໝາຍ AI ເພື່ອວາງຂອບທາງກົດໝາຍສຳລັບຮູບແບບພື້ນຖານ




(Xinhua) - ວັນທີ 8 ກໍລະກົດນີ້, ສະພາດູມາແຫ່ງລັດ ສະພາຕ່ຳຂອງລັດຖະສະພາລັດເຊຍ ໄດ້ຜ່ານກົດໝາຍເພື່ອວາງຂອບທາງກົດໝາຍສຳລັບການພັດທະນາ, ການນຳໃຊ້ ແລະ ການໃຊ້ຮູບແບບພື້ນຖານປັນຍາປະດິດ ຫຼື ເອໄອ (artificial intelligence - AI) ຂະໜາດໃຫຍ່ໃນປະເທດ; ກົດໝາຍສະບັບນີ້ ໄດ້ນຳສະເໜີແນວຄິດຂອງຮູບແບບພື້ນຖານ AI "ອະທິປະໄຕ" ແລະ "ລະດັບຊາດ" ແລະ ໃຫ້ສິດນັກພັດທະນາເຂົ້າເຖິງຂໍ້ມູນຂອງລັດເພື່ອການຝຶກອົບຮົມ.

ຮູບແບບ AI ອະທິປະໄຕ ຈະຕ້ອງໄດ້ຮັບການພັດທະນາ ແລະ ຄວບຄຸມຢ່າງເຕັມທີ່ຕະຫຼອດວົງຈອນຊີວິດຂອງພວກມັນ ໂດຍນິຕິບຸກຄົນຂອງລັດເຊຍ ແລະ ຈະຕ້ອງເກັບໄວ້ໃນສູນຂໍ້ມູນຂອງລັດເຊຍ; ສ່ວນຮູບແບບ AI ລະດັບຊາດກໍຕ້ອງໄດ້ຮັບການພັດທະນາໂດຍນິຕິບຸກຄົນຂອງລັດເຊຍເຊັ່ນກັນ, ແຕ່ສາມາດລວມເອົາອົງປະກອບແຫຼ່ງເປີດ(open-source) ຈາກຕ່າງປະເທດໄດ້. ທັງສອງປະເພດຕ້ອງປະຕິບັດຕາມກົດໝາຍຂອງລັດເຊຍແລະຄຸນຄ່າທາງສິນທຳ ແລະ ຈິດວິນຍານດັ້ງເດີມຂອງປະເທດ.

ລັດຖະບານ ຈະມີອຳນາດໃນການກຳນົດໃຫ້ໃຊ້ຮູບແບບ AI ອະທິປະໄຕ ແລະ ລະດັບຊາດແຕ່ພຽງຜູ້ດຽວ ໃນລະບົບຂໍ້ມູນຂ່າວສານຂອງລັດຖະບານ ແລະ ຂະແໜງການທີ່ສຳຄັນອື່ນໆ.

ກົດໝາຍຍັງກຳນົດໃຫ້ເນື້ອຫາສຽງ ແລະ ພາບທີ່ສ້າງຂຶ້ນໂດຍໃຊ້ຮູບແບບພື້ນຖານ AI ຂະໜາດໃຫຍ່ ຕ້ອງມີການຕິດສະຫຼາກ.

ບົດບັນຍັດສ່ວນໃຫຍ່ຂອງກົດໝາຍ ຈະມີຜົນບັງຄັບໃຊ້ໃນວັນທີ 1 ກັນຍາ; ໃນຂະນະທີ່ຂໍ້ກຳນົດກ່ຽວກັບຮູບແບບ AI ອະທິປະໄຕ ແລະ ລະດັບຊາດ, ພັນທະຂອງນັກພັດທະນາ, ການຕິດສະຫຼາກເນື້ອຫາທີ່ສ້າງໂດຍ AI ແລະ ການໃຊ້ຊັບສິນທາງປັນຍາໃນການຝຶກອົບຮົມຮູບແບບຈະມີຜົນບັງຄັບໃຊ້ໃນວັນທີ 1 ມີນາ 2017.

ລະບົບທີ່ມີຢູ່ແລ້ວ ຈະໄດ້ຮັບການຍົກເວັ້ນຈົນຮອດວັນທີ 1 ກັນຍາ 2032 ໂດຍມີເງື່ອນໄຂວ່າຂໍ້ມູນຈະຕ້ອງຖືກປະມວນຜົນ ແລະ ເກັບຮັກສາໄວ້ພາຍໃນປະເທດລັດເຊຍ.

# ປະທານາທິບໍດີ Zimbabwe ລົງນາມໃນຮ່າງລັດຖະທຳມະນູນສະບັບປັບປຸງ




(Xinhua)-ເອັມເມີສັນ ມະນັງກາກວາ (Emmerson Mnangagwa) ປະທານາທິບໍດີ ແຫ່ງ ສາທາລະນະລັດຊິມບັບເວ ໄດ້ລົງນາມໃນຮ່າງລັດຖະທຳມະນູນສະບັບປັບປຸງ ສະບັບທີ 3 ເມື່ອວັນອັງຄານທີ 7 ກໍລະກົດນີ້, ໂດຍຂະຫຍາຍວາລະການດຳລົງຕຳແໜ່ງປະທານາທິບໍດີ ຈາກ 5 ເປັນ 7 ປີ ເຊິ່ງເຮັດໃຫ້ວາລະປັດຈຸບັນຂອງເຂົາ ຈະສິ້ນສຸດໃນປີ 2030; ນິກ ມັງວານາ (Nick Mangwana) ເລຂາທິການຖາວອນໃນກະຊວງຖະແຫຼງຂ່າວ, ການປະຊາສຳພັນ ແລະ ບໍລິການກະຈາຍສຽງ ຢືນຢັນເລື່ອງນີ້ຜ່ານເວທີສື່ສັງຄົມ X .

ຮ່າງດັ່ງກ່າວ ໄດ້ຜ່ານທັງສອງສະພາຂອງລັດຖະສະພາ, ໂດຍສະພາແຫ່ງຊາດ(ສະພາຕ່ຳ) ອະນຸມັດການປັບປຸງຂັ້ນສຸດທ້າຍເມື່ອໜຶ່ງອາທິດກ່ອນນີ້; ຫຼັງຈາກປະທານາທິບໍດີລົງນາມ, ລັດຖະດຳລັດກ່ຽວກັບການປະກາດໃຊ້ລັດຖະທຳມະນູນສະບັບປັບປຸງ ໄດ້ຖືກເຜີຍແຜ່ໃນຈົດໝາຍເຫດທາງລັດຖະການຢ່າງເປັນທາງການແລ້ວ.

ລັດຖະທຳມະນູນສະບັບປັບປຸງ ໄດ້ນຳສະເໜີການປ່ຽນແປງທີ່ສຳຄັນຫຼາຍຢ່າງ ລວມທັງການຂະຫຍາຍວາລະການດຳລົງຕຳແໜ່ງຂອງປະທານາທິບໍດີ, ລັດຖະສະພາ ແລະ ອຳນາດການປົກຄອງທ້ອງຖິ່ນ ຈາກ 5 ເປັນ 7 ປີ; ນອກຈານີ້, ຍັງປ່ຽນການເລືອກຕັ້ງປະທານາທິບໍດີໂດຍກົງຈາກປະຊາຊົນ ໄປສູ່ການເລືອກຕັ້ງຜ່ານລັດຖະສະພາ.

# ຫວຽດນາມອະນຸມັດຂັ້ນຕອນການພິຈາລະນາຄະດີຂອງສານທີ່ໄວຂຶ້ນ ສຳລັບການຟື້ນຟູຜູ້ຕິດຢາເສບຕິດໃນໄວເດັກ




(Xinhua) - ວັນພຸດທີ 8 ກໍລະກົດນີ້, ຄະນະປະຈຳສະພາແຫ່ງຊາດຫວຽດນາມ ເຊິ່ງເປັນອົງການນິຕິບັນຍັດສູງສຸດຂອງປະເທດ ໄດ້ອະນຸມັດດ້ານຫຼັກການຮ່າງກົດໝາຍ ທີ່ເປັນການປັບປຸງຂັ້ນຕອນການພິຈາລະນາຄະດີຂອງສານໃຫ້ໄວຂຶ້ນ ສຳລັບການສັ່ງໃຫ້ມີການຟື້ນຟູຜູ້ຕິດຢາເສບຕິດໃນກຸ່ມເຍົາວະຊົນອາຍຸລະຫວ່າງ 12-18 ປີ.

ຮ່າງກົດໝາຍນີ້ ໄດ້ນຳລະບົບການຍື່ນ, ການສົ່ງ ແລະ ການຮັບເອກະສານຂອງສານແບບເອເລັກໂຕຣນິກມາໃຊ້ ແລະ ໃຫ້ອຳນາດແກ່ຜູ້ພິພາກສາຫຼາຍຂຶ້ນໃນການດຳເນີນການພິຈາລະນາຄະດີ.

ນອກຈາກນີ້, ຍັງຫຼຸດໄລຍະເວລາທີ່ສານຈະພິຈາລະນາ ແລະ ຕັດສິນກ່ຽວກັບການຟື້ນຟູຜູ້ຕິດຢາເສບຕິດແບບບັງຄັບ ຈາກ 15 ເຫຼືອ 10 ວັນ ຫຼື ຈາກ 30 ເຫຼືອ 20 ວັນ ໃນກໍລະນີທີ່ຊັບຊ້ອນ; ຂະນະດຽວກັນ, ກໍອະນຸຍາດໃຫ້ ການພິຈາລະນາຄະດີໃນຂັ້ນຕົ້ນດຳເນີນຕໍ່ໄປໄດ້ ເຖິງແມ່ນວ່າຈະບໍ່ມີໄອຍະການກໍຕາມ.

ຮ່າງກົດໝາຍຍັງຄົງຮັກສາກົດລະບຽບໃນປັດຈຸບັນ ທີ່ກຳນົດໃຫ້ໄອຍະການຕ້ອງເຂົ້າຮ່ວມການພິຈາລະນາຄະດີໃນຂັ້ນອຸທອນ ແລະ ຈະເລື່ອນການພິຈາລະນາຄະດີອອກໄປໃນກໍລະນີທີ່ບໍ່ມີໄອຍະການ.

# ສ.ເກົາຫຼີ ບັງຄັບໃຊ້ກົດໝາຍຕ້ານຂ່າວປອມ ຜູ້ເຜີຍແຜ່ຈ່າຍ 5 ເທົ່າຂອງຄວາມເສຍຫາຍ

(The New York Times) - ລັດຖະບານ ສ.ເກົາຫຼີເລີ່ມບັງຄັບໃຊ້ກົດໝາຍເຄືອຂ່າຍຂໍ້ມູນຂ່າວສານ ແລະ ການສື່ສານ ເຊິ່ງເພີ່ມການລົງໂທດຕໍ່ການເຜີຍແຜ່ຂໍ້ມູນທີ່ບໍ່ຖືກຕ້ອງ ຫຼື ຖືກບິດເບືອນທາງອອນລາຍ ໂດຍມີຈຸດ ປະສົງເພື່ອຕ້ານບັນຫາຂ່າວປອມທີ່ເພີ່ມຂຶ້ນຢ່າງຕໍ່ເນື່ອງໃນຍຸກດິຈິຕອນ, ທ່າມກາງການວິພາກວິຈານວ່າ ກົດໝາຍອາດກະທົບຕໍ່ເສລີພາບໃນການສະແດງຄວາມຄິດເຫັນ ແລະ ເສລີພາບຂອງສື່.

ກົດໝາຍສະບັບປັບປຸງ ເຊິ່ງມີຜົນບັງຄັບໃຊ້ໃນວັນທີ 7 ກໍລະກົດນີ້ ກຳນົດໃຫ້ຜູ້ເຜີຍແຜ່ເນື້ອຫາທີ່ມີຜູ້ຕິດຕາມຫຼາຍກວ່າ 100,000 ຄົນ ຫຼື ມີຜູ້ເຂົ້າຊົມສະເລ່ຍຢ່າງໜ້ອຍ 100,000 ຄັ້ງຕໍ່ເດືອນ, ຫາກເຈດຕະນາເຜີຍແຜ່ຂໍ້ມູນທີ່ບໍ່ຖືກຕ້ອງ ຫຼື ຖືກປອມແປງ ເພື່ອສະແຫວງຫາຜົນປະໂຫຍດ ຫຼື ສ້າງຄວາມເສຍຫາຍແກ່ຄົນອື່ນ ອາດຖືກສານສັ່ງໃຫ້ຈ່າຍຄ່າເສຍຫາຍສູງສຸດເຖິງຫ້າເທົ່າຂອງຄວາມເສຍຫາຍທີ່ເກີດຂຶ້ນຈິງ; ນອກຈາກນີ້, ຜູ້ທີ່ເຜີຍແຜ່ຂໍ້ມູນທີ່ສານຕັດສິນວ່າເປັນຂໍ້ມູນທີ່ບໍ່ຖືກຕ້ອງ ຫຼື ຖືກບິດເບືອນຊ້ຳແລ້ວຊ້ຳອີກ ຫຼາຍກວ່າສອງຄັ້ງ ອາດຖືກປັບໃໝສູງສຸດ 1 ຕື້ວອນ (ປະມານ 660,000 ໂດລາ).

ລັດຖະບານໃຫ້ເຫດຜົນວ່າ ກົດໝາຍສະບັບນີ້ມີຈຳເປັນເພື່ອປົກປ້ອງປະຊາຊົນຈາກຜົນກະທົບຂອງຂໍ້ມູນທີ່ບໍ່ຖືກຕ້ອງ ແລະ ຖືກບິດເບືອນ ທີ່ແຜ່ລາມຢ່າງໄວວາໃນສື່ສັງຄົມອອນລາຍ, ໂດຍສະເພາະຫຼັງຈາກຄວາມບໍ່ສະຫງົບທາງການເມືອງ ແລະ ເຫດການຂ່າວປອມທີ່ສ້າງຜົນກະທົບຢ່າງກວ້າງຂວາງ ໃນໄລຍະຊຸມປີທີ່ຜ່ານມາ.

ຢ່າງໃດກໍຕາມ, ຝັກຝ່າຍຄ້ານ, ສະມາຄົມນັກຂ່າວເກົາຫຼີ ແລະ ອົງການສິດທິມະນຸດຫຼາຍແຫ່ງ ໄດ້ສະແດງຄວາມກັງວົນວ່າ ນິຍາມຂອງຄຳ "ຂໍ້ມູນທີ່ບໍ່ຖືກຕ້ອງ" ແລະ "ຂໍ້ມູນທີ່ບິດເບືອນ" ຍັງບໍ່ຊັດເຈນ, ອາດເປັນຊ່ອງວ່າງໃຫ້ມີການຕີຄວາມໝາຍກົດໝາຍຢ່າງກວ້າງຂວາງ ນຳໄປສູ່ການກວດສອບເນື້ອຫາ, ການກວດສອບຕົນເອງໂດຍຜູ້ໃຊ້, ແລະ ສິ່ງຜົນກະທົບຕໍ່ການກວດສອບຂອງລັດຖະບານແລະສື່ມວນຊົນ.



## ຄຳເຫັນ...

(ຕໍ່ຈາກໜ້າ 1)

ຊັກຖາມກັບທີ່ 26 ທ່ານ ຕໍ່ຮ່າງວາລະແຫ່ງຊາດ ວ່າດ້ວຍການພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກ ເຊິ່ງມີດັ່ງນີ້:

1. ຂົງເຂດກະຊວງການເງິນ

1) ທາງດ້ານງົບປະມານ ເຫັນດີໃຫ້ກຳນົດເປັນບ້ວງສະເພາະສຳລັບວາລະແຫ່ງຊາດ ວ່າດ້ວຍການພັດທະນາຊົນນະບົດແລະການແກ້ໄຂຄວາມທຸກຍາກ ຕິດພັນກັບວຽກງານກໍ່ສ້າງຮາກຖານການເມືອງ; ເພື່ອເຮັດໃຫ້ວາລະດັ່ງກ່າວສາມາດດຳເນີນໄປໄດ້ຕາມແຜນການ, ສະເໜີໃຫ້ລັດຖະບານ ນອກຈາກ 4 ແຫຼ່ງທຶນງົບປະມານແລ້ວ ຄົ້ນຄວ້າແຫຼ່ງທຶນອື່ນໆຕື່ມ ຈະແມ່ນບ້ວງເງິນເກີນແຜນຂອງແຕ່ລະແຂວງ, ພ້ອມທັງປຸກລະດົມການມີສ່ວນຮ່ວມຂອງປະຊາຊົນ ແລະ ສັງຄົມ ແລະ ຈັດສັນງົບປະມານເຂົ້າໃສ່ການລົງທຶນຢ່າງມີຈຸດສຸມ.

2) ດ້ານການລົງທຶນ ສະເໜີໃຫ້ມີນະໂຍບາຍດຶງດູດການລົງທຶນໃນຂົງເຂດກະສິກຳ-ອຸດສາຫະກຳປຸງແຕ່ງ ຢູ່ເຂດຊົນນະບົດຫ່າງໄກສອກຫຼີກ, ພ້ອມທັງເອົາໃຈໃສ່ຕິດຕາມກວດກາການດຳເນີນງານຂອງໂຄງການ ໃຫ້ມີປະສິດທິພາບ ແລະ ປະສິດທິຜົນ ເນື່ອງຈາກວ່າຜ່ານມາ ການດຶງດູດການລົງທຶນໄດ້ເປັນຈຳນວນຫວູງຫຼາຍ, ແຕ່ການຈັດຕັ້ງປະຕິບັດໂຄງການ ຍັງບໍ່ສາມາດຊ່ວຍໃຫ້ປະຊາຊົນຫຼຸດພົ້ນອອກຈາກຄວາມທຸກຍາກໄດ້ຢ່າງແທ້ຈິງ, ບາງໂຄງການຍັງສົ່ງຜົນກະທົບຕໍ່ຊີວິດການເປັນຢູ່ຂອງປະຊາຊົນ ເປັນຕົ້ນແມ່ນບັນຫາມົນລະພິດ ແລະ ເສັ້ນທາງຄົມມະນາຄົມເປ່ເພເສຍຫາຍ, ພື້ນທີ່ທຳການຜະລິດ ແລະ ອື່ນໆ.

2. ຂົງເຂດທະນາຄານ ອຳນວຍຄວາມສະດວກໃຫ້ປະຊາຊົນ, ຜູ້ປະກອບການ ແລະ ໂຄງການພັດທະນາຕ່າງໆສາມາດເຂົ້າເຖິງແຫຼ່ງທຶນ ແລະ ສິນເຊື່ອໄດ້ງ່າຍ, ສະດວກ, ວ່ອງໄວ ແລະ ມີອັດຕາດອກເບ້ຍທີ່ເໝາະສົມ, ຄຸ້ມຄອງອັດຕາເງິນເຟີ້ ແລະ ອັດຕາແລກປ່ຽນ ບໍ່ໃຫ້ມີການຜັນຜວນຫຼາຍ ເຊິ່ງຈະເປັນການກະທົບຕໍ່ການທຳມາຫາກິນຂອງປະຊາຊົນ.

3. ຂົງເຂດເສດຖະກິດ

1) ໃຫ້ຖືເອົາວຽກງານກະສິກຳເປັນທ່າແຮງ ໂດຍສຸມໃສ່ຈັດສັນເຂດການຜະລິດ, ມີການວິໄຈທີ່ດິນ, ກຳນົດປະເພດສິນຄ້າທີ່ຈະສົ່ງເສີມ, ຍົກສູງການສົ່ງເສີມການຜະລິດກະສິກຳຂອງປະຊົນໃນຊົນນະບົດ ດ້ວຍການສົ່ງເສີມທາງດ້ານເຕັກນິກ, ວິຊາການສະເພາະດ້ານ, ສົ່ງວິຊາການທີ່ມີຄວາມຮູ້ຄວາມສາມາດ ລົງຊຸກຍູ້ນຳພາປະຊາຊົນເຮັດຕົວຈິງ, ສ້າງວິຊາການກັບທີ່ເຂົ້າໃນວຽກງານການປູກ, ການລ້ຽງ ຕິດພັນກັບຕະຫຼາດ ລວມທັງຄົ້ນຄວ້າສ້າງ ແລະ ປັບປຸງສູນທົດລອງ, ສູນສົ່ງເສີມກະສິກຳ, ສູນເຕັກນິກ ແລະ ໃຫ້ຄວາມຮູ້ທາງດ້ານກະສິກຳ ໃນຂັ້ນຕາແສງທີ່ມີເງື່ອນໄຂ ເພື່ອໃຫ້ວຽກງານດັ່ງກ່າວໄດ້ຮັບການພັດທະນາຢ່າງທົ່ວເຖິງ ແລະ ເປັນຮູບປະທຳ.

2) ຮີບຮ້ອນອອກໃບສຳມະໂນທີ່ດິນ ເພື່ອກ້າວໄປສູ່ການອອກໃບຕາດິນໃຫ້ສຳເລັດໂດຍໄວ ເພື່ອສ້າງຖານລາຍຮັບເພີ່ມຂຶ້ນ ເພາະຍັງມີຫຼາຍຂົງເຂດທີ່ມີການຈັບຈອງດິນ ເປັນການຖ່ວງດຶງການພັດທະນາຂອງປະຊາຊົນໃນຊົນນະບົດ, ພ້ອມທັງມີນະໂຍບາຍຊຸກຍູ້ສົ່ງເສີມໃຫ້ຜູ້ປະກອບການເຂົ້າໄປພັດທະນາການຜະລິດກະສິກຳໃນເຂດຫ່າງໄກສອກຫຼີກ ແລະ ມີການສ້າງໂຮງງານປຸງແຕ່ງເພື່ອເກັບຊື້ຜົນຜະລິດຂອງປະຊາຊົນເຂົ້າໃນໂຮງງານທີ່ເກັບຊື້ ເພື່ອປ້ອນຕະຫຼາດພາຍໃນ ແລະ ຕ່າງປະເທດ.

3) ວຽກງານໂຍທາທິການ ແລະ ຂົນສົ່ງ, ໃຫ້ຈັດສັນງົບປະມານ ແລະ ສຸມໃສ່ການພັດທະນາພື້ນຖານໂຄງລ່າງຢ່າງມີຈຸດສຸມ ໂດຍສະເພາະການກໍ່ສ້າງ ແລະ ບູລະນະສ້ອມແປງເສັ້ນທາງ ໃຫ້ສາມາດນຳໃຊ້ໄດ້ຕະຫຼອດປີ ແລະ ອຳນວຍຄວາມສະດວກໃຫ້ແກ່ການຜະລິດ, ການຂົນສົ່ງສິນຄ້າ, ການສັນຈອນໄປມາຂອງປະຊາຊົນ; ເອົາໃຈໃສ່ຂະຫຍາຍພື້ນຖານໂຄງລ່າງດ້ານອື່ນ ເປັນຕົ້ນ: ໄຟຟ້າ, ນ້ຳສະອາດ, ລະບົບໂທລະຄົມ ແລະ ການສື່ສານ ໃຫ້ທົ່ວເຖິງ.

4. ຂົງເຂດວັດທະນາທຳ-ສັງຄົມ

1) ດ້ານການສຶກສາ: ສືບຕໍ່ປັບປຸງຄຸນນະພາບການສຶກສາ, ຫຼັກສູດການຮຽນ-ການສອນ, ຍົກສູງລະດັບຄວາມຮູ້ຂອງຄູ-ອາຈານໃຫ້ມີຄຸນນະພາບ, ປັບປຸງອາຄານສະຖານການສຶກສາ ແລະ ສະໜອງອຸປະກອນການຮຽນ-ການສອນໃຫ້ຄົບຖ້ວນ ລວມທັງປະຕິບັດນະໂຍບາຍແກ່ນັກຮຽນທີ່ຮຽນດີຮຽນເກັ່ງ, ຜູ້ທຸກຍາກ, ດ້ອຍໂອກາດ, ສ້າງຄວາມເຂົ້າໃຈໃຫ້ປະຊາຊົນເຫັນໄດ້ຄວາມສຳຄັນຂອງການສຶກສາ.

2) ດ້ານສາທາລະນະສຸກ: ເອົາໃຈໃສ່ປັບປຸງສະຖານທີ່, ການບໍລິການສາທາລະນະສຸກຢູ່ຂັ້ນທ້ອງຖິ່ນ ໃຫ້ໄດ້ມາດຕະຖານດີຂຶ້ນ, ຮັບປະກັນເຮັດໃຫ້ປະຊາຊົນເຂົ້າເຖິງການນຳໃຊ້ນ້ຳສະອາດ; ສູ້ຊົນຈັດຕັ້ງປະຕິບັດ2ຄາດໝາຍຂອງຂະແໜງການທີ່ມີຄວາມສ່ຽງຈະບໍ່ບັນລຸກໍຄືອັດຕາການເກີດລູກມີແພດຊ່ວຍ ແລະ ອັດຕາການໃຫ້ວັກຊິນກັນພະຍາດ.

3) ຂົງເຂດແຮງງານ ແລະ ສະຫວັດດີການ-ສັງຄົມ: ສຸມໃສ່ແກ້ໄຂບັນຫາຂາດແຄນແຮງງານຢູ່ພາຍໃນປະເທດ ແລະ ການຫຼັ່ງໄຫຼໄປອອກແຮງງານຢູ່ຕ່າງປະເທດ, ເອົາໃຈໃສ່ເຝິກອົບຮົມແລະພັດທະນາສີມືແຮງງານໃຫ້ໄດ້ທັງປະລິມານ ແລະ ຄຸນນະພາບ, ປຸກລະດົມຮັບບໍລິຈາກເລືອດ ແລະ ສະໜອງເລືອດທີ່ປອດໄພເພື່ອນຳໃຊ້ເຂົ້າໃນການປິ່ນປົວສຸຂະພາບ, ກຳນົດຈຳນວນຕົວເລກຜູ້ທີ່ໄດ້ຮັບຜົນກະທົບຈາກລະເບີດບໍ່ທັນແຕກແລະຜູ້ທີ່ຍັງບໍ່ທັນໄດ້ຮັບການຊົດເຊີຍໃຫ້ຊັດເຈນຕື່ມ.

4) ດ້ານການທ່ອງທ່ຽວ: ສ້າງເງື່ອນໄຂອຳນວຍຄວາມສະດວກໃຫ້ແກ່ວຽກງານການທ່ອງທ່ຽວ ເປັນຕົ້ນ: ຂຸດຄົ້ນ ແລະ ນຳໃຊ້ທ່າແຮງງານບົ່ມຊ້ອນຂອງທ້ອງຖິ່ນ, ສົ່ງເສີມການທ່ອງທ່ຽວທາງດ້ານທຳມະຊາດ ແລະ ຊີວະນານາພັນ, ວັດທະນະທຳທາງດ້ານປະຫວັດສາດ, ດ້ານກະສິກຳ ແລະ ຫັດຖະກຳ.

ນອກຈາກນີ້, ຜູ້ແທນສະເໜີໃຫ້ລັດຖະບານນຳໄປຄົ້ນຄວ້າພິຈາລະນາຄືນ ເປັນຕົ້ນ: ຮີບຮ້ອນຄົ້ນຄວ້າສ້າງ ແລະ ປັບປຸງນິຕິກຳ ເພື່ອຮັບໃຊ້ແກ່ວຽກງານດັ່ງກ່າວໃຫ້ສຳເລັດ, ມີກົນໄກປະສານງານ ການແບ່ງຄວາມຮັບຜິດຊອບໃຫ້ຈະແຈ້ງ. ກອງປະຊຸມເຫັນດີກ່ຽວກັບການກຳນົດເວລາໃນການຈັດຕັ້ງປະຕິບັດຄວນໃຫ້ໄປຄຽງຄູ່ກັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ X, ກໍລະນີການຈັດຕັ້ງປະຕິບັດບໍ່ສຳເລັດ ກໍໃຫ້ສືບຕໍ່; ພ້ອມກັນນີ້, ກໍໃຫ້ເອົາໃຈໃສ່ໂຄສະນາເຜີຍແຜ່ເນື້ອໃນຈິດໃຈຂອງວາລະແຫ່ງຊາດສະບັບນີ້ໃຫ້ທົ່ວປວງຊົນໄດ້ຮັບຮູ້, ເຂົ້າໃຈຢ່າງກວ້າງຂວາງ ແລະ ທົ່ວເຖິງ.




*#ບ່າວກະບື*

**ຍິງ**ຄົນໜຶ່ງຈົ່ມໃຫ້ຍິງເຮືອນໃກ້ຟັງວ່າ ຜົວຂອງນາງ ກັບເຮືອນເດິກດື່ນເປັນປະຈຳ ເຖິງວ່ານາງຈະໃຊ້ໄມ້ແຂງເພື່ອຫ້າມເຂົາປານໃດກໍຕາມ.

"ຈົ່ງປະຕິບັດຕາມຄຳແນະນຳຂອງເຮົາ ແລະ ເຮັດຄືເຮົາເຮັດ" ຄົນເຮືອນໃກ້ເວົ້າຂຶ້ນ "ເມື່ອກ່ອນ ຄຳກີ້ຜົວຂອງເຮົາ ກັບເຮືອນເວລາສາມໂມງຕອນເຊົ້າເປັນປະຈຳ; ບາດແລ້ວ, ຈາກຕຽງນອນ ເຮົາເລີຍຮ້ອງອອກໄປວ່າ 'ເທີ! ແມ່ນເຈົ້າບໍ່ອ້າຍທຸງໄຊ' ແລະ ດ້ວຍວິທີນີ້ເອງ ຜົວເຮົາຈຶ່ງເລີກກັບເຮືອນເດິກ"

***#BAOKBU***

A woman was complaining to the neighbour that her husband always came home late, no matter how hard she tried to stop him.

"Take my advie," said the neighbour; "and do what I did. Once my husband Khamky always came home at three o'clock in the morning. And from my bed I called out, 'is that you Thoungxay?' And that cured him"



## ກອງປະຊຸມ...

(ຕໍ່ຈາກໜ້າ 1)

ທອງລຸນ ສີສຸລິດ ເລຂາທິການໃຫຍ່ຄະນະບໍລິຫານງານສູນກາງພັກປະຊາຊົນປະຕິວັດລາວ, ປະທານປະເທດ; ບັນດາທ່ານການນຳຂັ້ນສູງ ແລະ ອະດີດການນຳຂັ້ນສູງຂອງພັກ-ລັດ, ທ່ານສອນໄຊ ສີພັນດອນ ກຳມະການກົມການເມືອງສູນກາງພັກ, ນາຍົກລັດຖະມົນຕີ ແລະ ບັນດາທ່ານສະມາຊິກລັດຖະບານ, ສະມາຊິກສະພາແຫ່ງຊາດ (ສສຊ) ຈາກ 18 ເຂດເລືອກຕັ້ງທົ່ວປະເທດ, ຜູ້ຕາງໜ້າອົງການຈັດຕັ້ງພັກ-ລັດ, ສູນກາງແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າລາວ, ອົງການຈັດຕັ້ງມະຫາຊົນຂັ້ນສູນກາງ, ບັນດາຜູ້ຊົງຄຸນວຸດທິ, ສະຖາບັນການສຶກສາ, ຫົວໜ່ວຍທຸລະກິດ, ບັນດາທູຕານຸທູດ ແລະ ຜູ້ຕາງໜ້າອົງການຈັດຕັ້ງສາກົນປະຈຳລາວ ແລະ ແຂກຖືກເຊີນ.

ໃນວາລະສຸດທ້າຍຂອງການປະຊຸມ, ທ່ານ ພູວົງ ກິດຕະວົງ ຮອງລັດຖະມົນຕີກະຊວງການເງິນ ຕາງໜ້າໃຫ້ຄະນະຮັບຜິດຊອບຮ່າງກົດໝາຍ ໄດ້ລາຍງານຄືນການປັບປຸງຮ່າງກົດໝາຍວ່າດ້ວຍງົບປະມານແຫ່ງລັດ (ປັບປຸງ) ແລະ ຮ່າງກົດໝາຍວ່າດ້ວຍຄັງເງິນແຫ່ງລັດ(ສ້າງໃໝ່); ຈາກນັ້ນ, ບັນດາທ່ານ ສສຊ ໄດ້ສຸມໃສ່ປະກອບຄຳເຫັນຕໍ່ການລາຍງານ ແລະ ລົງຄະແນນສຽງຮັບຮອງເອົາດ້ວຍຄະແນນສຽງເຫັນດີເປັນເອກະພາບ.

ທ່ານ ບຸນຈັນ ສິວົງພັນ ຫົວໜ້າຫ້ອງວ່າການສະພາແຫ່ງຊາດ, ຫົວໜ້າກອງເລຂານຸການກອງປະຊຸມ ໄດ້ສະເໜີຮ່າງມະຕິກອງປະຊຸມສະພາແຫ່ງຊາດ ຈຳນວນ 2 ສະບັບ ຄື: ມະຕິຮັບຮອງເອົາບົດລາຍງານຂອງລັດຖະບານວ່າດ້ວຍການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ແຜນງົບປະມານແຫ່ງລັດ, ແຜນເງິນຕາ 6 ເດືອນຕົ້ນປີ 2026 ແລະ ທິດທາງແຜນການ 6 ເດືອນທ້າຍປີ 2026 ແລະ ມະຕິຮັບຮອງເອົາວາລະແຫ່ງຊາດ ວ່າດ້ວຍການພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກ; ຈາກນັ້ນ, ບັນດາທ່ານ ສສຊ ກໍໄດ້ສຸມໃສປະກອບຄຳເຫັນຕໍ່ 2 ຮ່າງມະຕິ ແລະ ລົງຄະແນນສຽງຮັບຮອງເອົາດ້ວຍຄະແນນສຽງເຫັນດີເປັນເອກະພາບ.

ຕອນທ້າຍກອງປະຊຸມ, ທ່ານ ໄຊສົມພອນ ພົມວິຫານ ໄດ້ກ່າວສູນທອນພິດປິດກອງປະຊຸມສະໄໝວິສາມັນເທື່ອທີ 1 ຂອງ ສພຊ ຊຸດທີ X ຢ່າງເປັນທາງການ.

**(ນາງ ສຸພາວັນ ທອມສະນິດ)**

ຜູ້ຊີ້ນຳ
ທ່ານ ເຂັມພອນ ອາໂນໄທ

ຄະນະບັນນາທິການ
ທ່ານ ບໍ ທານປະເສີດ ຫົວໜ້າ ບກ
ທ່ານ ເອລາວັນ ພັນທະລາວົງ ຮອງຫົວໜ້າ ບກ
ທ່ານ ວິລະພັດ ພາບວິໄຊ ຮອງຫົວໜ້າ ບກ
ທ່ານ ບຸນເກີດ ວົງໄຊຍາ ຮອງຫົວໜ້າ ບກ
ທ່ານ ແກ້ວລະກາ ຊ້ອຍໄຊຍະ ຮອງຫົວໜ້າ ບກ

ກອງບັນນາທິການ
ທ່ານ ນາງ ວັນນາລິນ ສຸລິວົງສັກ
ທ່ານ ນາງ ໄຊໂສພາພອນ ມິ່ງມຸງຄຸນ
ທ່ານ ນາງ ສຸພາວັນ ທອມສະນິດ
ທ່ານ ນາງ ອາລິນ ສຸພົມມະປະດິດ

ອອກແບບ - ຈັດໜ້າ
ທ່ານ ນາງ ກຸກກິກ ບຸດດາໄຊ

ຮູບພາບປະກອບ
ທ່ານ ສອນສັກ ວັນວິໄຊ